# ບົດປະເມີນ ຂະແໜງການຄ້າ ແລະ ການລົງທຶນ

ຜົນໄດ້ຮັບທີ 1 : ບົດປະເມີນຂະແໜງການຄ້າ ແລະ ການລົງທຶນ

*ADB **TA 9136:** ນະໂຍບາຍສົ່ງເສີມເສດຖະກິດລາວ ເພື່ອເພີ່ມຜະລິດຕະພາບທຸລະກິດ ແລະ ການຈ້າງງານ*

# ສປປ ລາວ ໃນສະຖານະການທີ່ແຕກຕື່ນ

## ເຖິງເວລາທີ່ ສປປ ລາວ ຄວນຈະດໍາເນີນງານດ້ານຕ່າງໆຂອງຕົນແລ້ວ

### Covid-19 ເຮັດໃຫ້ລະບົບເສດຖະກິດ-ສັງຄົມ ແຕກຕື່ນ ແລະ ຫຍຸດຊະງັກ

#### ສະພາບເສດຖະກິດຕົກຕໍ່າຄັ້ງປະຫວັດຕິສາດ

- ປະເທດລາວຕ້ອງປະສົບກັບການຂະຫຍາຍໂຕທາງເສດຖະກິດໃນສະຖານະການໂລກລະບາດ Covid-19
- ເຖິງວ່າປະເທດລາວມີມາດຕະການຕ່າງໆເພື່ອຫຼີກລ່ຽງບໍ່ໃຫ້ມີກໍລະນີຕິດເຊື້ອ ຫຼື ເສຍຊີວິດຍ້ອນ Covid-19 ແຕ່ລາວຍັງມີລັກສະນະອ່ອນນ້ອຍຫຼາຍ
- ທະນາຄານລະບຸວ່າ Covid-19 ແມ່ນບັນຫາ-ສິ່ງທ້າທາຍອັນທີສາມຕໍ່ກັບຂະບວນການພັດທະນາທາງເສດຖະກິດຂອງອາຊີ

#### ການຢຸດຊະງັກຂອງແຜນພັດທະນາ

- ຊາຍແດນຂອງລາວຖືກປິດ ແລະ ບໍ່ອະນຸຍາດໃຫ້ມີການເຂົ້າ-ອອກ
- ສະພາແຫ່ງຊາດກັງວົນວ່າລັດຖະບານຈະບໍ່ສາມາດບັນລຸເປົ້າໝາຍການຂະຫຍາຍໂຕທາງເສດຖະກິດຕາມທີ່ວາງໄວ້ໄດ້
- ການບໍລິການປະຕູດຽວຍັງບໍ່ສາມາດຈັດຕັ້ງປະຕິບັດໄດ້, ກ່າວໂດຍທ່ານຮອງນາຍົກລັດຖະມົນຕີ

#### ສະພາບແວດລ້ອມ-ສັງຄົມທີ່ຖົດຖອຍ

- ຄໍາຖາມກ່ຽວກັບການພັດທະນາ: ຖ່ານຫີນຈະເຂົ້າມາຢູ່ໃນແຜນພະລັງງານຂອງລາວໄດ້ແນວໃດ?
- ການຍົກຍ້າຍທີ່ຢູ່ອາໄສຂອງປະຊາຊົນຍັງລໍຖ້າການຊົດເຊີຍ
- ບັນດາເຂື່ອນໄຟຟ້າໃນລາວເຮັດໃຫ້ຫຼາຍຝ່າຍມີຄວາມກັງວົນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ

### ປະເທດຄູ່ແຂ່ງສາມາດຮັບມືກັບສະຖານະການໄດ້ດີກວ່າ ສປປ ລາວ

#### ມີພາບລວມເສດຖະກິດທີ່ດີ

- UBS Group ປະເມີນວ່າ "ຫວຽດນາມເປັນໜຶ່ງໃນບັນດາປະເທດທີ່ມີການຂະຫຍາຍຕົວທາງເສດຖະກິດ-ສັງຄົມທີ່ສົດໃສທີ່ສຸດໃນອາຊີ"
- ອີງຕາມລາຍງານ: ກໍາປູເຈຍ, ມຽນມາ ແລະ ຫວຽດນາມ ແມ່ນປະເທດທີ່ໄດ້ຮັບຜົນປະໂຫຍດຫຼາຍທີ່ສຸດຈາກການຜະລິດເຄື່ອງນຸ່ງຫົ່ມ
- ປະລິມານດ້ານການຄ້າຂອງມຽນມາຍັງຈະສືບຕໍ່ເພີ່ມຂຶ້ນເຖິງວ່າຈະມີໂລກລະບາດ

#### ປະຕິບັດຕາມແຜນຂະຫຍາຍໂຕທາງການຄ້າ

- ກໍາປູເຈຍຕ້ອງການທີ່ຈະເຮັດສັນຍາການຄ້າເສລີກັບອິນເດຍ, ຂໍ້ຕົກລົງກັບຈີນຈະເລີ່ມປະຕິບັດໃນເດືອນສິງຫາ.
- ກະຊວງໄດ້ສ້າງແຜນ 5 ປີ ສໍາລັບຂະແໜງຕັດຫຍິບ ແລະ ຕໍ່າແຜ່ນ
- ຍີ່ປຸ່ນລົງທຶນຍ້າຍຖານການຜະລິດອອກຈາກຈີນເພື່ອໃຫ້ມາຜະລິດພາຍໃນ ຫຼື ປະເທດອາຊຽນອື່ນໆ
- ສັນຍາການຄ້າສະຫະພາບເອີຣົບ ແລະ ຫວຽດນາມໄດ້ເລີ່ມຈັດຕັ້ງປະຕິບັດແລ້ວ

#### ຍັງສືບຕໍ່ເປັນປະເທດທີ່ໜ້າສົນໃຈສໍາລັບນັກລົງທຶນ

- ຫວຽດນາມ: ກະຊວງອຸດສາຫະກໍາ ແລະ ການຄ້າ ວາງແຜນການພັດທະນາແບບຍືນຍົງສໍາລັບ ຍີ່ຫໍ້ແຫ່ງຊາດຫວຽດນາມ
- (ການສ້າງຄວາມເຂັ້ມແຂງດ້ານນິຕິກໍາເພື່ອດຶງດູດການລົງທຶນໂດຍກົງຈາກຕ່າງປະເທດ)
1. ກົດໝາຍວ່າດ້ວຍຄົນເຂົ້າເມືອງສະບັບໃຫມ່ເພື່ອສ້າງຄວາມໜ້າສົນໃຈແກ່ການລົງທຶນ
2. ກົດໝາຍວ່າດ້ວຍການລົງທຶນສະບັບໃຫມ່ຈະຊ່ວຍດຶງດູດການລົງທຶນຫຼາຍຂຶ້ນ
- ກໍາປູເຈຍ: ສ້າງເມືອງທີ່ດີທີ່ສຸດແຫ່ງທໍາອິດຂອງລາດຊະອານາຈັກເພື່ອດຶງດູດການລົງທຶນ
- ມຽນມາ: ສ້າງເຂດເສດຖະກິດພິເສດ "ນິຄົມອຸດສາຫະກໍາຢ່າງກຸງຕາເວັນຕົກ ທີ່ເຊື່ອມຕໍ່ກັບ ແລວທາງຮ່ວມມືເສດຖະກິດຕາເວັນອອກ-ຕາເວັນຕົກຂອງອະນຸພາກພື້ນແມ່ນໍ້າຂອງ

#### ສ້າງຄວາມເຂັ້ມແຂງໃຫ້ວຽກງານການຫັນເປັນດິຈິຕອນ

- ກະຊວງການຄ້າໄດ້ຮ່າງແຜນຈັດຕັ້ງປະຕິບັດວຽກງານການຄ້າອີແບບເລັກໂທຣນິກ
- ມຽນມາ-ຈີນຈະສົ່ງເສີມລະບົບການຄ້າຂ້າມແດນແບບອີເລັກໂທຣນິກ

**ສະນັ້ນ ສປປ ລາວຕ້ອງເລີ່ມເດີນໜ້າແລ້ວ**

# ສັງລວມບັນດາຄຳແນະນຳ



# ຟື້ນຟູປະເທດຈາກ Covid-19

- ກະຊວງ ອຄ
- ກະຊວງ ຜທ
- ອົງການອື່ນໆ

## ອຸດສາຫະກຳທີ່ໄດ້ຮັບຜົນກະທົບໂດຍກົງ

- **ການທ່ອງທ່ຽວ:** ຄາດວ່າລາຍຮັບຈະສູນເສຍປະມານ 27-77 ລ້ານ US$
- **ການຜະລິດ**: ການປິດປະເທດໃນທົ່ວໂລກຍ້ອນໂລກລະບາດທີ່ຮຸນແຮງຂຶ້ນໄດ້ກະທົບຕໍ່ລະບົບໂສ້ການສະຫນອງ

## ສືບຕໍ່: 13 ມາດຕະການກະຕຸ້ນເສດຖະກິດ

**US$11.2 ລ້ານ** ໄດ້ຖືກນຳໃຊ້ເພື່ອແກ້ໄຂຜົນກະທົບທາງເສດຖະກິດເພື່ອລິເລີ່ມໃນວຽກງານຕ່າງໆ:

- **ພາສີໄຟຟ້າ** ແລະ ການ**ສ້າງເສັ້ນທາງ**
- **ຜ່ອນຜັນດ້ານອາກອນ** ແລະ **ດອກເບ້ຍຈາກການເລື່ອນຊໍາລະເງິນກູ້**ຂອງບັນດາຂະແຫນງທີ່ໄດ້ຮັບຜົນກະທົບຫນັກ, ແລະ
- **ປ່ຽນໂຄງສ້າງໜີ້** ແລະ ໃຫ້ເງິນກູ້ແກ່ຂະແຫນງເປົ້າຫມາຍເຊັ່ນ: ຂະແຫນງກະສິກຳ ແລະ ຂະແຫນງການຜະລິດ.

**ທຸລະກິດ**

ກະທົບຕໍ່ການຈ້າງງານ, ລາຍຮັບ ແລະ ຄ່າແຮງງານເກີດຂຶ້ນບໍ່ພຽງແຕ່ເກີດກັບຂະແຫນງທີ່ໄດ້ຮັບຜົນກະທົບໂດຍກົງ ແຕ່ກະທົບທຸກຂະແຫນງໃນທົ່ວລະບົບເສດຖະກິດ

**ແຮງງານ**

**ຄົວເຮືອນ**

**ໄພວ່າງງານທີ່ເພີ່ມຂຶ້ນ:** ຖ້າໂລກລະບາດຍັງສືບຕໍ່ລະບາດຮຸນແຮງໄປເຖິງເດືອນ 9/2020, ທະນາຄານພັດທະນາອາຊີຄາດວ່າ 34,000 ຫນ້າວຽກມີຄວາມສ່ຽງຈະຖືກໂຈະ.

**ການຂະຫຍາຍໂຕທາງດ້ານເສດຖະກິດທີ່ຊັກຊ້າຢ່າງຕໍ່ເນື່ອງ:** ທີ່ເກີດຈາກພຶດຕິກຳການໃຊ້ຈ່າຍຂອງຜູ້ບໍລິໂພກທີ່ປ່ຽນໄປ, ຄາດວ່າອັດຕາການໃຊ້ຈ່າຍຫຼຸດລົງປະມານ 40-50%. ນອກນີ້ຍັງມີຜົນກະທົບຈາກການລະບາດຂອງ Covid-19.

## ເພື່ອສ້າງຄວາມສະຖຽນລະພາບ ແລະ ສົ່ງເສີມການຂະຫຍາຍໂຕທາງເສດຖະກິດ, ສິ່ງທີ່ຕ້ອງປະຕິບັດໃຫ້ສຳເລັດໃນຕອນນີ້ປະກອບມີດັ່ງນີ້:



**1. ຊ່ວຍເຫຼືອພາກທຸລະກິດ**

**ກະຕຸ້ນ:** ລະບຸຂະແຫນງການທີ່ໄດ້ຮັບຜົນກະທົບໂດຍກົງ ແລະ ມີມາດຕະການກະຕຸ້ນຕ່າງໆເພື່ອຊ່ວຍເຫຼືອ

**ຜ່ອນຜັນດ້ານອາກອນ:** ສົ່ງເສີມໃຫ້ມີການສົ່ງຄືນເງິນອາກອນຊັບສິນ, ອາກອນລາຍຮັບໃຫ້ແກ່ພາກທຸລະກິດເພື່ອໃຫ້ມີການຮັກສາການຈ້າງງານ, ເລື່ອນການຊໍາລະອາກອນ ແລະ ຄ່າທຳນຽມຕ່າງໆອອກໄປ.




**2. ຈັດການກັບໄພຫວ່າງງານ**

**ຜ່ອນຜັນດ້ານອາກອນ:** ສົ່ງເງິນອາກອນຊັບສິນ ແລະ ອາກອນລາຍຮັບໃຫ້ແກ່ຊາວຜູ້ອອກແຮງງານ

**ຈັດຫາງານ:** ຫາອາຊີບທີ່ເປັນອາຊີບເສີມຊົ່ວຄາວໃຫ້

**ລະດົມ**ພາກເອກະຊົນໃຫ້ຮັກສາການຈ້າງງານ

**ຝຶກອົບຮົມ** ດ້ານສີມື ແລະ ທັກສະໃຫ້ຊາວຜູ້ອອກແຮງງານ



**3. ສ້າງສະຖຽນລະພາບໃຫ້ຕ່ອງໂສ້ການສະຫນອງ**

- **ເຂົ້າຫາບໍລິສັດຜູ້ສະຫນອງທີ່ມີໃນປະຈຸບັນ ແລະ ຜູ້ສະຫນອງລາຍໃຫມ່**: ໝູນໃຊ້ໂລຈິສຕິກ ແລະ ການຜະລິດ, ຄຸ້ມຄອງດ້ານອຸປະກອນ ແລະ ຄວາມຕ້ອງການຂອງຜູ້ບໍລິໂພກ



**4. ຊ່ວຍເຫຼືອພາກຄົວເຮືອນ**

- **ຜ່ອນຜັນ**ດ້ານຄ່າທຳນຽມຕ່າງໆຂອງລັດ, ການຊໍາລະອາກອນ ແລະ ການກູ້ເງິນ




**5. ເຜີຍແຜ່ກ່ຽວກັບການຊ່ວຍເຫຼືອທີ່ມີໃຫ້ແກ່ພາກທຸລະກິດ ແລະ ນັກລົງທຶນຊາບ**

- ສ້າງຈຸດສູນກາງການປະສານງານເພື່ອໃຫ້ຄວາມຊ່ວຍເຫຼືອ ແລະ ກະກຽມຄຳຖາມ-ຄຳຕອບທີ່ຖືກສອບຖາມເຂົ້າມາຢ່າງເປັນປະຈຳໄວ້ສຳລັບນັກທຸລະກິດ ແລະ ນັກລົງທຶນ, ເຊິ່ງກະກຽມໄວ້ທັງໃນພາສາຕ່າງໆເຊັ່ນ: ລາວ ແລະ ອັງກິດ

# ສິ່ງທີ່ຕ້ອງປະຕິບັດເພື່ອກ້າວໄປທາງໜ້າ

## ຜົນໄດ້ຮັບທີ 1: ພາບລວມຂອງບັນດາຄໍາແນະນໍາທີ່ ສປປ ລາວປະຕິບັດຢູ່ປະຈຸບັນ

**ຜົນໄດ້ຮັບທີ 1: ປັບປຸງຂອບນະໂຍບາຍການລົງທຶນຕາມຄໍາແນະນໍາ**

ໂຄງການຊ່ວຍເຫຼືອຂອງທະນາຄານພັດທະນາອາຊີ: ນະໂຍບາຍສົ່ງເສີມເສດຖະກິດລາວ ເພື່ອເພີ່ມຜະລິດຕະພາບ ແລະ ການຈ້າງງານ

- ✓ ສປປ ລາວ ຕ້ອງສືບຕໍ່ລັດຕັ້ງປະຕິບັດແນວທາງດັ່ງກ່າວ ພ້ອມກັບສ້າງຄວາມໝັ້ນໃຈໃຫ້ແກ່ນັກລົງທຶນ

- ✓ ສປປ ລາວ ຕ້ອງສືບຕໍ່ສ້າງວິໄສທັດ ແລະ ເບິ່ງໄປທາງໜ້າ ເພື່ອພັດທະນາໃຫ້ໄດ້ຕາມແຜນພັດທະນາເສດຖະກິດ-ສັງຄົມໄລຍະຍາວ ໄປຄຽງຄູ່ກັບການສ້າງການຟື້ນຕົວທາງເສດຖະກິດໃຫ້ປະເທດຫລັງການລະບາດຂອງ Covid-19

**ໄດ້ຮັບໝາກຜົນໄວ**

**ຄວາມງ່າຍດາຍໃນການທໍາເນີນທຸລະກິດ**
- ຫຼຸດຂັ້ນຕອນການສ້າງຕັ້ງທຸລະກິດ
- ການຮວມສູນທຸລະກິດ ແລະ ການບັນທຶກອາກອນ
- ການເກັບກໍາຂໍ້ມູນການຊໍາລະອາກອນແບບອີເລັກໂຕຣນິກ
- ເຮັດໃຫ້ການຄ້າຂາຍເປັນເລື່ອງງ່າຍດາຍ

**ຫ້ອງການບໍລິການປະຕູດຽວ**
- ການປັບໂຄງຮ່າງການຈັດຕັ້ງຄືນໃໝ່*
- ການອະນຸມັດການປະກອບທຸລະກິດແມ່ນໃຫ້ພາກສ່ວນດຽວເປັນຜູ້ຮັບຜິດຊອບ
- ການມີລະບົບທີ່ມີປະສິດທິພາບ
- ການເບິ່ງແຍງນັກລົງທຶນພາຍຫຼັງມີການລົງທຶນ*

**ການລົງທຶນໃນການສ້າງຍີ່ຫໍ້ຜະລິດຕະພັນລາວ**
- ການພັດທະນາເວັບໄຊ້ທ໌
- ການພັດທະນາເນື້ອຫາໃນເວັບໄຊ້ທ໌

**ການນໍາບັນດານະໂຍບາຍມາຮວມກັນ**
- ແຕ່ລະກະຊວງມີນະໂຍບາຍໄປໃນລວງດຽວກັນ**
- ມີການຈັດຕັ້ງປະຕິບັດຢ່າງພ້ອມພຽງ
- ມີການວາງແຜນ ແລະ ສົ່ງເສີມການເຊື່ອມໂຍງກັນ
- ມີການນໍາເອົາຄໍາເຫັນຂອງພາກທຸລະກິດຜັນຂະຫຍາຍ

**ການຜະສົມຜະສານດ້ານເສດຖະກິດ**
- ກະຈາຍການຄ້າ ແລະ ລົງທຶນໃຫ້ຫຼາກຫຼາຍ
- ໃຫ້ການຊ່ວຍເຫຼືອທຸລະກິດໃນເຂດເສດຖະກິດພິເສດ*

**ຊັບພະຍາກອນມະນຸດ**
- ລົງທຶນໃສ່ການສ້າງຄວາມອາດສາມາດຂອງຊັບພະຍາກອນມະນຸດ
- ໝູນໃຊ້ບຸກຄະລາກອນໃຫ້ຖືກຕ້ອງ ແລະ ທີ່ແທດເໝາະຕາມໜ້າວຽກ**

# ສິ່ງທີ່ຕ້ອງປະຕິບັດເພື່ອກ້າວໄປທາງໜ້າ

ເພື່ອປະສົບຜົນສໍາເລັດໄວ

- ກະຊວງ ອຄ
- ກະຊວງ ຜທ
- ອົງການອື່ນໆ

## ສົ່ງເສີມຍີ່ຫໍ້ການລົງທຶນລາວ

*ສືບຕໍ່ປັບປຸງ ເວັບໄຊທ໌*

ຂໍ້ມູນຈັດເຈນ ແລະ ເຮັດໃຫ້ມີມາດຕະຖານ

ກະກຽມຄໍາຖາມ-ຄໍາຕອບທີ່ຖືກຖາມປະຈໍາ

ສ້າງຊ່ອງທາງເຂົ້າເຖິງຂໍ້ມູນໄດ້ໂດຍກົງ ໃນສື່ສັງຄົມອອນໄລ, ຊ່ອງຊອກຂໍ້ມູນ ໃນເວັບໄຊທ໌

ໂຄສະນາປະຊາສໍາພັນກ່ຽວກັບ ຜົນສໍາເລັດຂອງນິຄົມອຸດສາຫະກໍາສະຫວັນເພື່ອດຶງດູດການລົງທຶນ

ກະກຽມນະໂຍບາຍ ແລະ ລະບຽບສະບັບພາສາອັງກິດ

ເຮັດໄດ້ດີແລ້ວ ແຕ່ກໍ່ຕ້ອງສືບຕໍ່ປະຕິບັດຕໍ່ໄປ




ໃຊ້ເວລາ ແລະ ຊັບພະຍາກອນໜ້ອຍ

→ ໄດ້ຮັບຜົນປະໂຫຍດໃນໄລຍະຍາວ ເນື່ອງຈາກຂໍ້ມູນໃນເວັບໄຊ້ແມ່ນເພື່ອນັກລົງທຶນປະຈຸບັນ ແລະ ອະນາຄົດ

## ຟື້ນຟູຫ້ອງການບໍລິການປະຕູດຽວ

### 1. ການອະນຸມັດໃນສະຖານທີ່

ທ່ານ ສອນໄຊ ສີພັນດອນ, ຮອງນາຍົກລັດຖະມົນ ໄດ້ຕອບຄໍາຖາມຢູ່ໃນກອງປະຊຸມສະໄໝສາມັນ ເທື່ອທີ່ 9 ຂອງສະພາແຫ່ງຊາດຊຸດທີ່ 8 ເຊິ່ງທ່ານໄດ້ກ່າວວ່າ: ການບໍລິການປະຕູດຽວທີ່ລັດຖະບານໄດ້ຈັດຕັ້ງປະຕິບັດເພື່ອເຮັດໃຫ້ຂອດການຂໍອະນຸມັດສ້າງຕັ້ງທຸລະກິດສໍາເລັດໄດ້ທີ່ຈຸດດຽວນັ້ນ ປະຈຸບັນແມ່ນບໍ່ສາມາດຈັດຕັ້ງປະຕິບັດໄດ້ຢ່າງມີປະສິດທິພາບ, ປະຈຸບັນການຂໍອະນຸຍາດປະກອບທຸລະກິດຍັງຕ້ອງໄດ້ຂໍຜ່ານບັນດາກະຊວງທີ່ກ່ຽວຂ້ອງເໝືອນເດີມ.




### 2. ການໃຫ້ບໍລິການ

| ຕໍ່ຍອດລະບົບທີ່ມີຢູ່ | ພັດທະນາຄວາມອາດສາມາດໂດຍການບໍລິຫານຜົນການປະຕິບັດວຽກ | ຈັດວຽກໃຫ້ຖືກກັບຄົນ |
|---|---|---|
| ຈັດຕັ້ງປະຕິບັດວຽກແບບລະບົບ matrix ກັບພະແນກກ່ຽວຂ້ອງ | ແຕ່ງຕັ້ງຜູ້ຈັດການດ້ານບັນຊີ, ສ້າງຕົວຊີ້ວັດການປະຕິບັດວຽກງານ ແລະ ອື່ນໆ. | ມອບ ຫຼື ຈັດສັນວຽກໃຫ້ພະນັກງານ ພ້ອມກັບມີການລະບຸພາລະບົດບາດ ແລະ ໜ້າວຽກທີ່ຈະຕ້ອງປະຕິບັດຢ່າງລະອຽດ-ຈັດເຈນ. |

### 3. ການເບິ່ງແຍງນັກລົງທຶນເພື່ອຮັບປະກັນຄວາມຕໍ່ເນື່ອງຂອງການສົ່ງເສີມລົງທຶນ ແລະ ອໍານວຍຄວາມສະດວກ

- ທະນາຄານພັດທະນາອາຊີໄດ້ຈັດສໍາມະນາກ່ຽວກັບການບໍລິການລູກຄ້າ, ການຄຸ້ມຄອງບັນຊີ, , ການສ້າງສາຍພົວພັນ, ແລະ ການຕິດຕໍ່ສື່ສານ ແລະ ການຂາຍ ເຊິ່ງເປັນການສໍາມະນາເພື່ອສ້າງຄວາມສາມາດ ແລະ ທັກສະໃຫ້ພະນັກງານ
- ສ້າງລະບົບການສຶກສາອົບຮົມ

**ການເບິ່ງແຍງນັກລົງທຶນຂອງປະເທດຟິລິບປິນ**

ສະພາຄຸ້ມຄອງການລົງທຶນ (BOI) ໄດ້ສ້າງຕັ້ງສູນຊ່ວຍເຫຼືອດ້ານການລົງທຶນ (IAC) ເຊິ່ງມີພະແນກບໍລິການຫຼັງການລົງທຶນ (ASD). ພະແນກດັ່ງກ່າວໄດ້ໃຫ້ບໍລິການຊ່ວຍເຫຼືອແກ່ນັກລົງທຶນຫຼັງທີ່ໄດ້ເຂົ້າມາລົງທຶນແລ້ວ ເພື່ອຊ່ວຍແກ້ໄຂບັນຫາ ຫຼື ອຸປະສັກທີ່ກ່ຽວຂ້ອງ.

# ສິ່ງທີ່ຕ້ອງປະຕິບັດເພື່ອກ້າວໄປທາງໜ້າ

*ການຟື້ນຟູດ້ານເສດຖະກິດແມ່ນໝາກຫົວໃຈສໍາຄັນ*

**ການປັບຕົວເຂົ້າກັບສະພາບປົກກະຕິ ໃໝ່**

ໂລກລະບາດໄດ້ຂະຫຍາຍຕົວສູ່ວິກິດເສດຖະກິດແລະຈະມີຜົນກະທົບທີ່ຍາວນານໃນທົ່ວໂລກ

**ໄລຍະສັ້ນແລະກາງ: ຄວາມຢືດຢຸ່ນ**

ບຸລິມະສິດ ໃໝ່ ໃນການວາງພື້ນຖານຂອງຄວາມຢືດຢຸ່ນຫຼາຍຂື້ນ

**ໄລຍະຍາວ: ການຈະເລີນເຕີບໂຕ**

ສປປລາວຄວນ ນໍາ ໃຊ້ປະໂຫຍດຈາກ ຄໍາ ສັ່ງ ໃໝ່ ດ້ານເສດຖະກິດໂລກເພື່ອບັນລຸການເຕີບໂຕໃນໄລຍະຍາວແບບຍືນຍົງ

**3 ຍຸດທະສາດສໍາລັບ ສປປ ລາວ**



**1. ການຂະຫຍາຍໂຕແບບຍືນຍົງຂອງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອງ ແລະ ກາງ**

*ໃຫ້ຄວາມສໍາຄັນຕໍ່ບັນດາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງໃນລະບົບເສດຖະກິດ ແລະ ໃຫ້ມີການຮັບປະກັນວ່າຈະມີການພັດທະນາແບບຍືນຍົງ*



**2. ການກະສິກໍາ**

*ສປປ ລາວ ຄວນໝູນໃຊ້ຈຸດແຂງທີ່ຕົນມີຢູ່ໃນປະຈຸບັນ ແລະ ພະຍາຍາມເດີນໜ້າຕໍ່ກັບການພັດທະນາເສດຖະກິດ-ສັງຄົມດ້ວຍຍຸດທະສາດພັດທະນາສີຂຽວ 2030*



**3. ການຫັນເປັນເສດຖະກິດດິຈິຕອນ**

*ການປິດປະເທດໄດ້ເຮັດໃຫ້ເຫັນວ່າການນໍາໃຊ້ລະບົບດິຈິຕອນ ແລະ ເທັກໂນໂລຊີແມ່ນມີຄວາມສໍາຄັນຫຼາຍ. ສະນັ້ນ, ການຈັດຕັ້ງປະຕິບັດວຽກງານຂອງລັດຖະບານຄວນມີການຫັນມານໍາໃຊ້ວິທີການດັ່ງກ່າວ*

# ສິ່ງທີ່ຕ້ອງປະຕິບັດ ເພື່ອການຟື້ນຟູ

## ໃນໄລຍະເວລາ 6 ເດືອນ ເຖິງ 2 ປີທາງໜ້າ ອີກຕື່ມ

- ສປປ ລາວ ອາດໃຊ້ຫຼາຍເວລາຫຼາຍກວ່າ 6 ເດືອນ ໃນການຟື້ນຕົວ
- ສປປ ລາວ ຄວນໝູນໃຊ້ບົດຮຽນອັນລ້ຳຄ່າຈາກ ການລະບາດຂອງ Covid-19 ໃນການເນັ້ນໃສ່ສ້າງ ພື້ນຖານທີ່ເຂັ້ມແຂງ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ 9 (2021-2025)
- ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ 9 ຈະເຮັດໃຫ້ລາວມີຄວາມພ້ອມໃນການປະສົບຜົນສຳເລັດໃນວຽກງານການພັດທະນາແບບຍືນຍົງ

# ໄລຍະການຟື້ນຟູ

## ການຂະຫຍາຍຕົວແບບຍືນຍົງຂອງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ-ກາງ (MSMEs)

ຄຽງຄູ່ກັບມາດຕະການຕ່າງໆ, ຕົ້ນເຫດຂອງບັນຫາແມ່ນສະພາບແວດລ້ອມໃນການປະກອບທຸລະກິດແມ່ນບໍ່ເອື້ອອໍານວຍເທົ່າທີ່ຄວນ ເຊິ່ງບັນຫາດັ່ງກ່າວຄວນຖືກແກ້ໄຂ. ທັງນີ້ເພື່ອໃຫ້ສາມາດແກ້ໄຂບັນຫາໄດ້ສໍາເລັດສິ່ງທີ່ທີ່ຕ້ອງປະຕິບັດມີຄື: ສ້າງຄວາມເຂັ້ມແຂງ ແລະ ເຮັດໃຫ້ມີການຮວມຕົວກັນຂອງທະນາຄານໃນລາວ, ອອກແບບ ແລະ ຈັດຕັ້ງປະຕິບັດກົດລະບຽບທີ່ສາມາດປ້ອງກັນການຜິດຊໍາລະໜີ້ເງິນກູ້ດ້ວຍຄວາມຈົງໃຈ ຫຼື ບໍ່ຈົງໃຈ, ການປ້ອງກັນຄວາມສ່ຽງທີ່ຈະໃຊ້ທະນາຄານໃນການກະທໍາຜິດ, ແລະ ພ້ອມນີ້ກໍ່ໃຫ້ສົ່ງເສີມການລົງທຶນໃນໄລຍະຍາວ.

**ຊ່ວຍ MSMEs ໃຫ້ປະສົບຜົນສໍາເລັດ**

ຄວນໃຫ້ການຊ່ວຍເຫຼືອຫລາຍກວ່າເດີມໂດຍສະເພາະ**ວິສາຫະກິດຂະໜາດກາງ**ເພື່ອໃຫ້ມີການຂະຫຍາຍຕົວໄວຂຶ້ນ.

ຈະສາມາດປະສົບຜົນສໍາເລັດໄດ້ໂດຍ:

- ເພີ່ມຄວາມອາດສາມາດໃນການເຂົ້າເຖິງແຫຼ່ງທຶນ ຫຼື ສ້າງຕັ້ງກອງທຶນສະເພາະ
- ໃຫ້ຄໍາແນະນໍາທີ່ຖືກຕ້ອງໃນການດໍາເນີນທຸລະກິດ

### ສິ່ງທ້າທາຍ

- ຄວາມຈໍາກັດໃນການເຂົ້າຫາແຫຼ່ງທຶນ
- ການເຂົ້າເຖິງຕະຫຼາດ
- ນະວັດຕະກໍາ ແລະ ຂັ້ນຕອນຮັບມືກັບສິ່ງທ້າທາຍ
- ຜະລິດຕະພາບ ແລະ ການພັດທະນາທຸລະກິດ

### ວິທີການແກ້ໄຂ

- ທະນາຄານຕ້ອງມີມາດຕະການຜ່ອນຜັນ
- Strengthen financial system through laws
- Form collective business systems for different sectors
- Provide focused government oversight
- ການຫັນເປັນດີຈີຕອນ

**ການຊ່ວຍເຫຼືອ SME ຕໍ່ການເຂົ້າເຖິງແຫຼ່ງທຶນ ຂອງປະເທດມາເລເຊຍ**

ທະນາຄານໃນມາເລເຊຍຖືວ່າເປັນຜູ້ສະໜອງທຶນແກ່ SMES ລາຍໃຫຍ່ທີ່ສຸດ, ບັນດາທະນາຄານໄດ້ໃຫ້ສັນຍາວ່າຈະພະຍາຍາມບໍ່ອັດຕາການປະຕິເສດການຂໍກູ້ເງິນມີອັດຕາທີ່ສູງ ເຊິ່ງໃນນັ້ນອັດຕາການປະຕິເສດມີ 20%.

**ເສັ້ນເຝີ Kuyteav ຂອງກໍາປູເຈຍ**

ສະມາຄົມພໍ່ຄົວຂອງກໍາປູເຈຍໄດ້ສ້າງລະບົບທຸລະກິດນີ້ຂຶ້ນມາເພື່ອໂຄສະນາຜະລິດຕະພັນພາຍໃນຂຶ້ນ. ເນື່ອງຈາກທີ່ຜ່ານມາການສິນຄ້າດັ່ງກ່າວແມ່ນເປັນທີ່ຮູ້ຈັກຂອງຜູ້ບໍລິໂພກພາຍໃນ, ສະນັ້ນພາກສ່ວນດັ່ງກ່າວຈຶ່ງສ້າງຈຸດຂາຍນີ້ຂຶ້ນມາເພື່ອກະຕຸ້ນຫົວໜ່ວຍການຜະລິດພາຍໃນ ແລະ ເພື່ອເປັນການສົ່ງເສີມການຂະຫຍາຍໂຕທາງເສດຖະກິດອີກດ້ວຍ. ນອກນີ້ ລະບົບດັ່ງກ່າວຍັງເປັນແຫຼ່ງຂໍ້ມູນ, ຊ່ວຍໃນວຽກງານຄຸ້ມຄອງມາດຕະຖານຄຸນນະພາບສິນຄ້າ ແລະ ຄວາມສະອາດ.

ລາວມີກົມສົ່ງເສີມການສົ່ງວິສາຫະກິດຂະໜາດນ້ອຍ ແລະ ກາງ. ເຖິງຢ່າງໃດກໍ່ຕາມ ການປະຕິບັດວຽກງານປັບປຸງ-ພັດທະນາ SME ຂອງໜ່ວຍງານກ່ຽວຂ້ອງຕ້ອງເປັນໄປຢ່າງມີປະສິດພາບ

ປະສານງານກັບສະມາຄົມການເງິນຈຸລະພາກ

# ການຟື້ນຟູ
## ກະສິກຳ

**ຍ້ອນຫຍັງ?**

ອັດຕາສ່ວນແບ່ງຄິດເປັນເປີເຊັນຂອງຕ່າງປະເທດໃນຂະແໜງການພາຍໃນ(1989 – 2019)




1. ສ້າງຄວາມເຂັ້ມແຂງທີ່ມີຢູ່

2. ຕ້ອງການກະຈາຍນອກເໜືອຈາກຂະແໜງ ອຸດສາຫະກຳຊັບພະຍາກອນທຳມະຊາດ

**ຍຸດທະສາດທີ່ສຳຄັນສຳລັບ ສປປ ລາວ**

- ກະຊວງ ອຄ
- ກະຊວງ ຜທ
- ອົງການອື່ນໆ

ຄວາມໜາແໜ້ນສູງຂອງດິນເພາະປູກ

ສັດສ່ວນສູງຂອງໄວໜຸ່ມ

ແວດລ້ອມທີ່ເອື້ອອຳນວຍ

ການຟື້ນຕົວກະສິກຳ ແລະ ຄວາມຍືນຍົງ

3. ສອດຄ່ອງກັບການຮັບຮອງເອົາຍຸດທະສາດການເຕີບໂຕສີຂຽວແຫ່ງຊາດ (2030)

4. ການນຳໃຊ້ເສັ້ນທາງລົດໄຟ ລາວ-ຈີນ

Refer to Annex 1 & 2

# ການຟື້ນຟູ

*ກະສິກຳ*

## ເຮັດແນວໃດ?



ເນື່ອງຈາກກຳລັງຄົນຫລາຍຂຶ້ນ ເຊັ່ນ ການຂະຫຍາຍເທັກໂນໂລຍີ ແລະ ຂີດຄວາມສາມາດ, ໂດຍລວມປະເທດເພື່ອນບ້ານສົ່ງອອກໃນປະລິມານຫລາຍຂອງຜະລິດຕະພັນທີ່ມີມູນຄ່າຕ່ຳ



ເພີ່ມຂີດຄວາມສາມາດ

ຄວາມແຕກຕ່າງ

## ຍຸດທະສາດທີ່ສຳຄັນສຳລັບ ສປປ ລາວ

- ກະຊວງ ອຄ
- ກະຊວງ ຜທ
- ອົງການອື່ນໆ

MEKONG INSTITUTE

### ໂອກາດສົ່ງອອກກະສິກຳຄົງທີ່ (ຄ້ຳປະກັນສະບຽງອາຫານ)

- ທົບທວນຄືນປະຈຳປີ ໂອກາດຄວາມຕ້ອງການຂອງຕະຫລາດທີ່ບໍ່ແນ່ນອນ ໃນໄລຍະກາງ
- ມີຄວາມຫຍຸ້ງຍາກສຳລັບຜູ້ຜະລິດ ແລະ ຜູ້ຊື້ຂາຍ ທີ່ຈະກະກຽມຍຸດທະສາດການຜະລິດ ແລະ ການສົ່ງອອກ ໃນໄລຍະກາງ

### ເພີ່ມຄວາມຮູ້ ແລະ ເທັກໂນໂລຍີ

- ປະສົບການສາມາດຮຽນຮູ້ ແລະ ຂະຫຍາຍຈາກໂຄງການການພັດທະນາເສດຖະກິດພາກພື້ນ ແລະ ພາຍໃນຂອງແລວທາງຮ່ວມມືເສດຖະກິດຕາເວັນອອກ-ຕາເວັນຕົກສະຖາບັນແມ່ນ້ຳຂອງ (RLED-EWEC)

### ການຜະລິດສິນຄ້າກະສິກຳລະດັບດີ







- ຮັບປະກັນຜົນກຳໄລອັນໃຫຍ່ຫຼວງໃນຕ່ອງໂສ້ມູນຄ່າທຸລະກິດກະສິກຳ

### ເວທີການຈັບຄູ່

- ຈັບຄູ່ນັກທຸລະກິດທີ່ເໝາະສົມກັບຊາວກະສິກອນ, ເປີດໂອກາດສຳລັບການເພີ່ມຂຶ້ນຂອງການສົ່ງອອກສິນຄ້າທີ່ເປັນທີ່ຕ້ອງການ

### ປັບປຸງຄຸນະພາບພືດ ແລະ ຄວາມປອດໄພ

- ປັບປຸງສາຍພົວພັນການຂາຍ ແລະ ຫລີກລ່ຽງການສູນເສຍ
- ສ້າງຕັ້ງສູນຄວບຄຸມຄຸນະພາບເຂດຂ້າມຊາຍແດນ

*ເອກະສານຊ້ອນທ້າຍ 2: ກໍລະນີການສົ່ງເສີມການເຕີບໂຕຂອງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ການ ໃນອຸດສາຫະກຳກະສິກຳປອດສານພິດ*

**ຊ່ອງວ່າງທີ່ສຳຄັນ: ກຳນົດທ່າແຮງຂອງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໂດຍສະເພາະນອກຈາກໄລຍະເລີ່ມການຜະລິດ ຂໍ້ສະເໜີໃນການແກ້ໄຂ:**

(1) ກຳນົດຜູ້ມີສ່ວນຮ່ວມທີ່ສຳຄັນ, ຊ່ອງວ່າງໃນລະບົບທີ່ມີຢູ່ ເພື່ອລະບຸການແກ້ໄຂທີ່ວເປົ້າໝາຍດ້ວຍຄວາມຮັບຜິດຊອບທີ່ກວ້າງຂວາງຂອງແຜນວາດຜົນສຳເລັດ Identify key stakeholders, gaps in the existing system to address with targeted cross-cutting solutions with respect to the wider picture of success

(2) ການຮ່ວມມື ແລະ ການປະສານງານ ລະຫວ່າງຄວາມແຕກຕ່າງກັນຂອງຜູ້ມີສ່ວນຮ່ວມທີ່ສຳຄັນ, ລັດຖະບານ ແລະ ແມກະທັ້ງອົງກອນສາກົນ

Refer to Annex 1 & 2

# ການຟື້ນຟູ

## *ການຫັນເປັນເສດຖະກິດດິຈິຕອນ*

**ຍຸດທະສາດທີ່ສຳຄັນສຳລັບ ສປປ ລາວ**

- ກະຊວງ ອຄ
- ກະຊວງ ຜທ
- ອົງການອື່ນໆ

**ຜົນກະທົບຂອງໂຄວິດ-19 ຊ່ວຍສົ່ງເສີມໃຫ້ ສປປ ລາວ ມີຜົນໂຫຍດອັນໃຫຍ່ຫລວງໃນການຫັນເປັນດິຈິຕອນ**

- ✓ ສົ່ງເສີມໃຫ້ລັດຖະບານເຜີຍແຜ່ຂໍ້ມູນຂ່າວສານທີ່ສຳຄັນໃຫ້ກັບປະຊາຊົນໄດ້ຢ່າງງ່າຍດາຍ
- ✓ ສະໜອງຫົວໜ່ວຍທຸລະກິດດ້ວຍການບໍລິການທີ່ດີສຸດໃນການແຂ່ງຂັນດ້ານລາຄາ
- ✓ ສົ່ງເສີມທຸລະກິດມີສ່ວນຮ່ວມໃນຕ່ອງໂສ້ມູນຄ່າຂອງໂລກ

**ແນວທາງການຈັດຕັ້ງປະຕິບັດຂອງພາກລັດ ພ້ອມດ້ວຍໜ່ວຍງານສະເພາະກິດເພື່ອຈັດຕັ້ງປະຕິບັດ ແລະ ຕິດຕາມ**

ບໍລິສັດເສດຖະກິດ ດິຈິຕອນຂອງມາເລເຊຍ (MDEC), ຮັບໜ້າທີ່ໃນການຊີ້ນຳວຽກງານເສດຖະກິດດິຈິຕອນແຫ່ງຊາດ. MDEC ຈະຕ້ອງໄດ້ຈັດຕັ້ງປະຕິບັດປະກອບດ້ວຍ: ການເປີດໃຈກວ້າງເພື່ອນຳໃຊ້ດິຈິຕອລ, ການພັດທະນາອຸດສາຫະກຳທີ່ມີທ່າແຮງ ແລະ ຄວາມພ້ອມດ້ານດິຈິຕອນ, ການສ້າງນະໂຍບາຍເສດຖະກິດດິຈິຕອນ ແລະ ຄວາມພ້ອມ ເພື່ອເປັນຜູ້ນຳໜ້າລະດັບໂລກ. ເພື່ອພິສູດວ່າໃນອະນາຄົດມາເລເຊຍຈະກ້າວເຂົ້າສູ່ຍຸກດິຈິຕອນ, ບໍລິສັດເສດຖະກິດດິຈິຕອນຈະນຳໃຊ້ທ່າແຮງ, ຄວາມໜ້າເຊື່ອຖື ແລະ ປະສົບການທັງໝົດທີ່ຜ່ານມາໃນການເຊື່ອມຕໍ່, ເລັ່ງໃຫ້ມີການຄ້າແບບດິຈິຕອນ ແລະ ເພື່ອປະສົບຜົນສຳເລັດ ແລະ ມີເສດຖະກິດດິຈິຕອລທີ່ຍືນຍົງເປັນໃຈກາງ.

**ໄລຍະສັ້ນ: ລັດຖະບານ**

- **ລັດຖະບານລາວນຳພາໃນການເປັນຕົວແບບໃນການຫັນມານຳໃຊ້ດິຈິຕອນ, ເຮັດໃຫ້ສັງຄົມຊາບກ່ຽວກັບການປ່ຽນແປງ.**
- ສົ່ງເສີມການປະສານງານຕິດຕໍ່ສື່ສານຜ່ານການອອນໄລນ໌ ພ້ອມກັບອຸປະກອນດິຈິຕອນແກ່ກະຊວງຫຼັກໆ ເຊັ່ນ: ກະຊວງອຸດສາຫະກຳ ແລະ ການຄ້າ.

**ໄລຍະກາງ: ສັງຄົມ**

- ຊ່ອງທາງການຄ້າຂາຍຜ່ານການຄ້າແບບອີເລັກໂທຣນິກ
- ນຳໃຊ້ນະໂຍບາຍດ້ານການແຂ່ງຂັນເພື່ອແຕ່ລະພາກສ່ວນມີການແຂ່ງຂັນໃນດ້ານການນຳໃຊ້ດິຈິຕອນ
- ປັບປຸງຍົກລະດັບທັກສະສີມືແຮງງານພາຍໃນຂະແໜງການທຸລະກິດ
- ລົງທຶນໃສ່ໂຄງລ່າງພື້ນຖານຂອງລະບົບໄອທີ ແລະ ວຽກງານດິຈິຕອນ
- ກຳນົດຂອບແບບລະບຽບເພື່ອຊຸກຍູ້ການແຂ່ງຂັນ ແລະ ເງື່ອນໄຂດ້ານຕະຫຼາດ

**ໄລຍະຍາວ: ລະດັບໂລກ**

- ເຮັດໃຫ້ການບໍລິການອິນເຕີເນັດໄດ້ຕາມມາດຕະຖານ ແລະ ສາມາດນຳໃຊ້ໄດ້ຕາມຄວາມຕ້ອງການທີ່ເພີ່ມຂຶ້ນ, ເຮັດໃຫ້ການຊຳລະຄ່າບໍລິການສະດວກ.
- ເປັນແຫຼ່ງລາຍຮັບທາງເລືອກຂອງລັດຖະບານ.

**ໂຄງການ (PeDAS) ຂອງໜ່ວຍງານເສດຖະກິດດິຈິຕອນຂອງມາເລເຊຍໃນວຽກງານການສ້າງທ່າແຮງໃຫ້ທຸລະກິດຂະໜາດນ້ອຍ ແລະ ກາງໃນເຂດຊົນນະບົດສາມາດເຂົ້າເຖິງການຄ້າທາງອີເລັກໂທຣນິກ**

MDEC - ໜ່ວຍງານເສດຖະກິດດິຈິຕອນຂອງມາເລເຊຍ ເປີດໂຕ ສູນອິນເຕີເນັດເຂດຫ່າງໄກສອກຫຼີກ (PID) ຈຳນວນ 10 ແຫ່ງເພື່ອໃຫ້ບໍລິການແບບສູນບໍລິການປະຕູດຽວທີ່ຈະເປີດໂອກາດ ແລະ ພື້ນທີ່ໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນການປັບປຸງທັກສະການຄ້າທາງອີເລັກໂທຣນິກຂອງພວກເຂົາ. ໂຄງການດັ່ງກ່າວນີ້ໄດ້ຊ່ວຍໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງໃນກວນເຂົ້າເຖິງຊ່ອງທາງການຄ້າທີ່ກວ້າງຂຶ້ນຕື່ມເປັນຕົ້ນແມ່ນ ເຂດການຄ້າເສລີທາງດິຈິຕອນ (DFTZ), ການບໍລິການທີ່ນຳສະເໜີໂດຍ PeDAS ລວມທັງຂໍ້ມູນຂອງບໍລິສັດເພື່ອຊ່ວຍ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງໃນການກຳນົດຄາມສາມາດດ້ານຕະຫລາດ ແລະ ຄວາມເປັນໄປໄດ້ໃນການດຳເນີນທຸລະກິດຂອງພວກເຂົາ. PeDAS ຊ່ວຍຫລຸດຜ່ອນພາລະຂອງຜູ້ປະກອບການ ແລະ ຜູ້ປະກອບການສ່ວນບຸກຄົນ ທີ່ບໍ່ມີລະບົບສະໜັບສະໜູນການເຊື່ອມຕໍ່ ຫລື ບໍ່ມີຄວາມຮູ້ດ້ານການຕະຫລາດດິຈິຕອນ, ບໍ່ມີຍີ່ຫໍ້ ແລະ ໃບຢັ້ງຢືນຫຍັງເລີຍ.

# ການຟື້ນຟູ

## ຍຸດທະສາດ

ກະຊວງ ອຄ
ກະຊວງ ຜທ
ອົງການອື່ນໆ

## ໝູນໃຊ້ເຂດເສດຖະກິດພິເສດໃຫ້ເກີດປະໂຫຍດສູງສຸດ

### ການຈ້າງງານ ແລະ ການຝຶກອົບຮົມ

- ພັນທະພື້ນຖານທີ່ຕິດພັນກັບການຈ້າງງານສາມາດເພີ່ມເຕີມເຂົ້າໃນດຳລັດວ່າດ້ວຍເຂດເສດຖະກິດພິເສດ
- ມີສູນລວມຖານຂໍ້ມູນຂອງແຮງງານ ສຳລັບນັກລົງທຶນ
- ສ້າງໂຮງຮຽນສອນວິຊາຊີບ, ສີມືແຮງງານ ແລະ ສ້າງຫຼັກສູດການຝຶກອົບຮົມ
- ຊ່ວຍເຫຼືອໃນວຽກງານຝຶກອົບຮົມສ້າງທັກສະໃຫ້ແກ່ຄົນລາວ

- ສົ່ງເສີມໃຫ້ມີໂຮງຮຽນວິຊາຊີບ-ການຊ່າງສຳລັບນັກຮຽນໄວກ່ອນຈົບມະຫາວິທະຍາໄລ.
- ສ້າງຫຼັກສູດຝຶກອົບຮົມທີ່ມີປະສິດທິພາບ
- ມີນາຍແປພາສີຕ່າງປະເທດຊ່ວຍເຫຼືອເລື່ອງການແປ

### ການເຊື່ອມຈອດ

**ໂມເດວ ໄທບວກໜຶ່ງ**
ບັນດາບໍລິສັດອຸດສາຫະກຳໃນໄທມີການຂະ ຫຍາຍຖານການຜະລິດ ໂດຍການສົ່ງຕໍ່ຂະບວນການຜະລິດສິນຄ້າພາກສ່ວນໃດໜຶ່ງ ຫຼື ອາໄຫລ່ຂອງສິນຄ້າຫຼັກໄປສູ່ພະເທດເພື່ອນບ້ານໂດຍສະເພາະແມ່ນປະເທດກຳປູເຈຍ, ລາວ ແລະ ມຽນມາ (CLM).

**ແຜນຍຸດທະສາດການພັດທະນາເຂດເສດຖະກິດພິເສດ 2021-2030**
ການສ້າງວຽກເຮັດງານທຳທີ່ຍືນຍົງ ແລະ ການສົ່ງຕໍ່ຄວາມຮູ້

**<u>ເຊື່ອມໂຍງ SMEs ເຂົ້າໄປໃນຕ່ອງໂສ້ການຜະລິດ ຂອງເຂດເສດຖະກິດພິເສດ</u>**
- ສ້າງ ແລະ ປັບປຸງຄວາມອາດສາມາດດ້ານທຸລະກິດໃຫ້ແກ່ທຸລະກິດຂະໜາດນ້ອຍ ແລະ ກາງ
- ຫຼຸດຄ່າໃຊ້ຈ່າຍຕ່າງໆທີ່ຕິດພັນກັບການລົງທຶນໃນເຂັດເສດຖະກິດພິເສດລົງ
  - ✓ ການຈັບຄູ່ນັກລົງທຶນ ແລະ ຜູ້ປະກອບການທຸລະກິດ SMEs
- ສ້າງ ແລະ ເພີ່ມການຈ້າງງານຄົນລາວພາຍໃນຊາດ.

**Covid-19**
ນຳໃຊ້ລະບອບ ຫຼື ຮູບແບບພິເສດເພື່ອດຶງດູການລົງທຶນໃນໄລຍະນີ້.

ກະຊວງ ອຄ
ກະຊວງ ຜທ
ອົງການອື່ນໆ

## ເສັ້ນທາງລົດໄຟລາວ-ຈີນ

- ເຮັດການປະເມີນດ້ານອຸປະສົງ ເພື່ອໃຫ້ຮູ້ໄດ້ປະເພດສິນຄ້າທີ່ເປັນທີ່ຕ້ອງການ ແລະ ສ້າງທ່າແຮງພາຍໃນເພື່ອໃຫ້ສາມາດຜະລິດສິນຄ້າດັ່ງກ່າວເປັນສິນຄ້າສະເພາະດ້ານ.
- ຊຸກຍູ້ອຸດສາຫະກຳຜະລິດອາໄຫລ່ ແລະ ຊຸກຍູ້ການສ້າງໂຄງລ່າງພື້ນຖານ-ເຂດເສດຖະກິດພິເສດ ບໍ່ເຕັນ
- ສ້າງຄວາມອາດສາມາດ ດ້ວຍການຈັດຝຶກອົບຮົມແບບທີ່ມີການຈຳລອງສະຖານະການຕ່າງໆ
- ກຽມເຊື່ອມໂຍງພາກພື້ນ ແລະ ການຄຸ້ມຄອງຄຸນນະພາບຊາຍແດນ
- ເຊື່ອມຊ່ອງຫວ່າງດ້ານຂໍ້ມູນໂດຍການສ້າງຖານຂໍ້ມູນ ແລະ ເປີໂທຕິດຕໍ່ປະສານງານ
- ເຮັດໃຫ້ພາກທຸລະກິດເຫັນໄດ້ເຖິງຜົນປະໂຫຍດທີ່ຄາດວ່າຈະໄດ້ຮັບ ພ້ອມທັກຜັກດັນ ແລະ ໃຫ້ການຊ່ວຍເຫຼືອເພື່ອໃຫ້ສາມາດບັນລຸໄດ້ເຖິງຄວາມສຳເລັດ

# ການຟື້ນຟູ

## *ຍຸດທະສາດດ້ານອື່ນໆ-ການອຳນວຍຄວາມສະດວກດ້ານການຄ້າ*

### ອຸປະສັກທີ່ທີ່ບໍ່ແມ່ນພາສີ

ອັດຕາພາສີສຳລັບແຕ່ລະກຸ່ມຜະລິດຕະພັນ ທີ່ຖືກກະທົບໂດຍມາດຕະການທີ່ບໍ່ແມ່ນພາສີ ໃນປີ 2016 (ຫົວໜ່ວຍ




ອຸປະສັກທາງການຄ້າທີ່ບໍ່ແມ່ນພາສີຄວນຖືກແກ້ໄຂເພື່ອໃຫ້ພາກເອກະຊົນສາມາດເຂົ້າເຖິງຕະຫຼາດສາກົນ

- ສືບຕໍ່ຫຼຸດຜ່ອນບັນດາອຸປະສັກທີ່ບໍ່ແມ່ນພາສີທີ່ຫຼາຍຂໍ້
- ສ້າງ ແລະ ຮັກສາຖານຂໍ້ມູນທີ່ເກັບກຳບັນດາ, ອຸປະສັກທາງການຄ້າທີ່ບໍ່ແມ່ນພາສີ ເພື່ອແບ່ງປັນຂໍ້ມູນ

### ຂະແໜງໂລຈິສຕິກ



ຍົກສູງການເຊື່ອມໂຍງລະຫວ່າງຂະແໜງຄົມມະນາຄົມ ແລະ ຂະແໜງໂລຈິສຕິກ ເພື່ອອຳນວຍຄວາມສະດວກດ້ານການຄ້າ ເພື່ອຫຼຸດຜ່ອນຕົ້ນທຶນຂອງການຄ້າລະຫວ່າງປະເທດ

ຄວນມີການອອກແບບຜັງເມືອງທີ່ດີ ເພື່ອເຮັດໃຫ້ບັນດາແຂວງມີການເຊື່ອມຕໍ່ກັນ





ດຶງດູດນັກລົງທຶນເພື່ອໃຫ້ມາລົງທຶນໃນການກໍ່ສ້າງໂຄງລ່າງພື້ນຖານ ແລະ ສູນຂົນສົ່ງ ເພື່ອຫຼຸດຜ່ອນການນຳໃຊ້ງົບປະມານຂອງພາກລັດ

# ສິ່ງທີ່ຕ້ອງປະຕິບັດ ເພື່ອການຟື້ນຟູ

| | ການຟື້ນຟູເສດຖະກິດ | |
|---|---|---|
| ປັດໃຈດ້ານທຶນ | 1. ການຂະຫຍາຍໂຕແບບຍືນຍົງຂອງທຸລະກິດ SMEs<br>2. ໝູນໃຊ້ເຂດເສດຖະກິດພິເສດ<br>3. ການກະສິກຳ<br>4. ການສ້າງເສດຖະກິດດີຈີຕອນ<br>5. ຂະແໜງໂລຈິສຕິກ | 1.1 ສ້າງສະມາຄົມທຸລະກິດ<br>2.1 ໂຄສະນາລະດົມໃຫ້ນັກລົງທຶນໃນປະເທດໃກ້ຄຽງເຂົ້າມາລົງທຶນໃນລາວ<br>3.1 ຝຶກອົບຮົມໃຫ້ຊາວກະສິກອນມີຄວາມສາມາດໃນການຜະລິດ ແລະ ສາມາດສ້າງມາດຕະຖານຄວາມປອດໄພດ້ານອາຫານ<br>4.1 ສົ່ງເສີມໃຫ້ມີການຫັນເປັນເສດຖະກິດດີຈີຕອນ ແລະ ຊຸກຍູ້ນຳໃຊ້ການຄ້າທາງອີເລັກໂທຣນິກ<br>5.1 ສ້າງຄວາມອາດສາມາດໃຫ້ບໍລິສັດຂົນສົ່ງພາຍໃນໃຫ້ສາມາດແຂ່ງຂັນ |
| ຂະບວນການ | 1. ການຂະຫຍາຍໂຕແບບຍືນຍົງຂອງທຸລະກິດ SMEs<br>2. ໝູນໃຊ້ເຂດເສດຖະກິດພິເສດ<br>3. ເສັ້ນທາງລົດໄຟລາວ-ຈີນ<br>4. ການກະສິກຳ<br>5. ການສ້າງເສດຖະກິດດີຈີຕອນ<br>6. ອຸປະສັກດ້ານການຄ້າທີ່ບໍ່ແມ່ນພາສີ<br>7. ຂະແໜງການໂລຈິສຕິກ | 1.1 ເພີ່ມການອຳນວຍຄວາມສະດວກໃນການເຂົ້າຫາແຫຼ່ງທຶນ<br>1.2 ປັບປຸງການປະສານງານກັບສະມາຄົມການເງິນຈຸລະພາກແຫ່ງຊາດ<br>2. ເພີ່ມການຈ້າງງານໃຫ້ແກ່ແຮງງານພາຍໃນ<br>3.1 ປະເມີນຄືນດ້ານຄວາມຕ້ອງການຄ່າສິນຄ້າ<br>3.2 ສ້າງໂມເດວການຄາດການດ້ານເສດຖະກິດ<br>4.1 ເນັ້ນໃສ່ພືດ ແລະ ສະໝຸນໄພທີ່ມີລາຄາສູງ<br>4.2 ຜະລິດໃຫ້ໄດ້ເກີນກຳນົດທີ່ຕ່າງປະເທດຄາດວ່າຈະຊື້<br>5.1 ສ້າງຄະນະສະເພາະກິດດ້ານການຄ້າແບບອີເລັກໂທຣນິກ<br>6.1 ສືບຕໍ່ຫຼຸດຜ່ອນອຸປະສັກດ້ານການຄ້າທີ່ບໍ່ແມ່ນພາສີ<br>7.1 ປັບປຸງຂະບວນການປະສານງານ |
| ໂຄງລ່າງພື້ນຖານ | 1. ການຂະຫຍາຍໂຕແບບຍືນຍົງຂອງທຸລະກິດ SMEs<br>2. ເສັ້ນທາງລົດໄຟລາວ-ຈີນ<br>3. ການກະສິກຳ<br>4. ການສ້າງເສດຖະກິດດີຈີຕອນ<br>5. ອຸປະສັກດ້ານການຄ້າທີ່ບໍ່ແມ່ນພາສີ<br>6. ຂະແໜງການໂລຈິສຕິກ | 1.1 ສ້າງຄະນະສະເພາະກິດເພື່ອການປັບປຸງຍົກລະດັບ SMEs<br>2.1 ສົ່ງເສີມອຸດສາຫະກຳຜະລິດອຸປະກອນອົງປະກອບ ຫຼື ອາໄຫຼ່ຕ່າງໆ<br>3.1 ນຳໃຊ້ເຕັກໂນໂລຢີເພື່ອເຮັດໃຫ້ສິນຄ້າກະສິກຳໄດ້ມາດຕະຖານ ແລະ ປອດໄພ<br>3.2 ສ້າງຊ່ອງທາງໃຫ້ທຸລະກິດແລະຊາວກະສິກອນໄດ້ພົບກັນ<br>4.1 ຈັດຕັ້ງປະຕິບັດກອບລະບຽບເພື່ອປ້ອງກັນການແຂ່ງຂັນ ແລະ ປົກປ້ອງຜູ້ບໍລິໂພກ<br>5.1 ສ້າງ ແລະ ຮັກສາຖານຂໍ້ມູນກ່ຽວກັບອຸປະສັກການຄ້າທີ່ບໍ່ແມ່ນພາສີ ແລະ ແບ່ງປັນຂໍ້ມູນເພື່ອແກ້ໄຂບັນຫາ<br>6.1 ສ້າງໂຄງລ່າງພື້ນຖານທີ່ສຳຄັນ ແລະ ອຸດສາຫະກຳອາໄຫຼ່ຕາມເສັ້ນທາງລົດໄຟລາວ-ຈີນ |

# ສິ່ງທີ່ຕ້ອງປະຕິບັດ ເພື່ອ ການເຕີບໂຕ

## ພາຍຫຼັງ 2 ປີຕໍ່ຈາກນີ້ (ປີ 2022 ເປັນຕົ້ນໄປ)

- ຫຼັງຈາກໄລຍະການຟື້ນຟູ ແລະ ເລີ່ມມີຄວາມເຂັ້ມແຂງແລ້ວ, ສປປ ລາວ ຕ້ອງໄດ້ສືບຕໍ່ພາລະກິດໃນການພັດທະນາປະເທດໃຫ້ຫຼຸດພົ້ນອອກຈາກສະຖານະປະເທດດ້ອຍພັດທະນາ ໃນປີ 2024.
- ການວາງແຜນໄລຍະຍາວຈະເຮັດໃຫ້ ສປປ ລາວ ສາມາດຫມູນໃຊ້ພື້ນຖານການພັດທະນາທີ່ໄດ້ປະຕິບັດໃນໄລຍະການຟື້ນຟູ ເພື່ອເຮັດໃຫ້ປະເທດປະສົບຜົນສໍາເລັດໃນການເຕີບໂຕທາງເສດຖະກິດ-ສັງຄົມແບບຍືນຍົງ ແລະ ຍາວນານ.
- ໜ່ວຍງານທີ່ເປັນເຈົ້າການປະສານງານລະຫວ່າງກະຊວງແຜນການ ແລະ ການລົງທຶນ, ກະຊວງອຸດສາຫະກໍາ ແລະ ການຄ້າ ພ້ອມກັບພັນດາກະຊວງທີ່ກ່ຽວຂ້ອງຈະສ້າງຍຸດທະສາດ ແລະ ຊີ້ນໍາໃນວຽກງານການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາຂອງ ສປປ ລາວ.

# ການເຕີບໂຕ

## ໂອກາດທາງການຄ້າ ແລະ ການລົງທຶນ

ກະຊວງ ອຄ
ກະຊວງ ຜທ
ອົງການອື່ນໆ

ການຄ້າ ແລະ ການລົງທຶນຄວນຫັນໄປໃນຂະແໜງການອື່ນໆນອກຈາກຂະແໜງທີ່ໃຊ້ຊັບພະຍາກອນທຳມະຊາດເປັນຫຼັກ

**ຂະແໜງການທີ່ມີທ່າແຮງທີ່ຈະເຕີບໂຕ**

**ເຄື່ອງນຸ່ງຫົ່ມ ແລະ ເຄື່ອງປະດັບ**

- ຜະລິດຕະພັນເຄື່ອງນຸ່ງຮົ່ມຂອງລາວແມ່ນຍັງເປັນທີ່ຕ້ອງການຂອງຕະຫຼາດສະຫະພາບເອີຣົບ ເຊິ່ງມີປະເທດເຢຍລະມັນເປັນປະເທດທີ່ມີການນຳເຂົ້າຫຼາຍສຸດ ຮອງລົງມາແມ່ນປະເທດອັງກິດ, ສະວິເດັນ ແລະ ປະເທດອາຣັບ
- ລາວມີທ່າແຮງກ່ຽວກັບສັນຍາການຄ້າສອງຝ່າຍ, ເຊິ່ງເຮັດໃຫ້ສິນຄ້າລາວໂດຍສະເພາະແມ່ນແຜ່ນແພ ແລະ ເຄື່ອງນຸ່ງຫົ່ມສາມາດສົ່ງອອກໄປສູ່ທະວີບດັ່ງກ່າວກັບສະຫະພາບເອີຣົບ

**ເຄື່ອງໄຟຟ້າ (ເຄື່ອງຈັກ ແລະ ອຸປະກອນ)**

- ຜູ້ຜະລິດປະເທດຍີ່ປຸ່ນໄດ້ຍ້າຍຖານການຜະລິດຈາກຈີນໄປສູ່ປະເທດອື່ນເນື່ອງຈາກຕົ້ນທຶນການຜະລິດທີ່ເພີ່ມຂຶ້ນ, ການຊ່ວຍເຫຼືອຈາກພາກລັດຫຼັງຈາກສະຖານະການ Covid-19, ແລະ ສະພາບທາງການເມືອງທີ່ບໍ່ໝັ້ນຄົງໃນປະເທດໄທ.
- ປະເທດລາວແມ່ນໄດ້ປຽບໃນດ້ານການປ່ຽນຖານການຜະລິດ ແລະ ຍັງສືບຕໍ່ໄດ້ຮັບຜົນປະໂຫຍດຈາກການທີ່ລາວຈະຜະລິດ ແລະ ສົ່ງອອກໄປໃຫ້ໄທ.

**ການທ່ອງທ່ຽວ**

- ປະກອບສ່ວນປະມານ 2 ຕື້ ດອນລາສະຫະລັດ ຫຼື 13.7% ຂອງ GDP ໃນປີ 2017. ແລະ ຄາດວ່າຈະເພີ່ມຂຶ້ນເປັນ 3:3 ຕື້ ດອນລາສະຫະລັດ ພາຍໃນປີ 2028
- ມີສະຖານທີ່ທ່ອງທ່ຽວທີ່ໄດ້ຮັບລາງວັນລະດັບໂລກ ແລະ ລະດັບພາກພື້ນຫຼາຍແຫ່ງ ເຊິ່ງໜຶ່ງໃນນັ້ນກໍ່ປມ່ນເມືອງມໍລະດົກໂລກ.
- ການທ່ອງທ່ຽວແບບອະນຸລັກສິ່ງແວດລ້ອມ, ການທ່ອງທ່ຽວທາງວັດທະນະທຳ ແລະ ການທ່ອງທ່ຽວທາງກະສິກຳ ແມ່ນບັນດາຂະແໜງການທີ່ມີທ່າແຮງຈະຂະຫຍາຍໂຕ.

**ໝູນໃຊ້ສິ່ງທີ່ມີໃນປະຈຸບັນໃຫ້ເກີດປະໂຫຍດ**

- ຂະແໜງການຜະລິດອາດຈະເປັນຂະແໜງການຫຼັກສຳລັບການຄ້າເຄື່ອງໃຊ້ໄຟຟ້າ (ກັບປະເທດຍີ່ ປຸ່ນ), ພາຫະນະ ແລະ ອາໄຫລ່ (ປະເທດໄທ) ແລະ ການຕັດຫຍິບ-ແຜນແພ (ສະຫະພາບເອີຣົບ), ເຊິ່ງອາດຈະສາມາດສ້າງມູນຄ່າທີ່ສູງ ພ້ອມທັງຊ່ວຍໃນການຈ້າງງານ.
- ຄ່າໄຟຟ້າທີ່ມີລາຄາຖືກສາມາດຫຼຸດຕົ້ນທຶນການຜະລິດໃນຂະແໜງສຸດສາຫະກຳ.

→ ການ**ພັດທະນາຂະແໜງການຜະລິດ**ຢ່າງກວ້າງຂວາງແມ່ນຊ່ວຍຄວນຈະເປັນຈຸດສຸມໃນໄລຍະຍາວ ເນື່ອງຈາກປະຈຸບັນການແຂ່ງຂັນລະຫວ່າງປະເທດອ້ອມຂ້າງແມ່ນມີສູງ.
→ **ເນັ້ນໃສ່ສິນຄ້າຄຸນນະພາບປະເພດທີ່ມີມູນຄ່າທາງເສດຖະກິດສູງ**

**ສ້າງຄວາມເຂັ້ມແຂງໃນດ້ານການຮ່ວມມືລະຫວ່າງພາກລັດ ແລະ ພາກເອກະຊົນ**

**ຫຼຸດຜ່ອນຄວາມສ່ຽງຜ່ານການຮ່ວມມືລະຫວ່າງພາກລັດ ແລະ ພາກເອກະຊົນ**

- ການສົ່ງເສີມໃຫ້ມີການຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນໂດຍຜ່ານລະບອບການລົງທຶນຈະສາມາດຊ່ວຍຫຼຸດຜ່ອນບັນຫາງົບປະມານຂອງລັດທີ່ຈະໃຊ້ໃນການພັດທະນາໂຄງລ່າງພື້ນຖານ ແລະ ການບໍລິການອື່ນໆຂອງ ສປປ ລາວ.

## ໝູນໃຊ້ການຫັນເປັນເສລີດ້ານການຄ້າ




**ຍຸດທະສາດການກະຈາຍ ເພື່ອຄວາມຍືນຍົງໃນໄລຍະຍາວ**

- ຈີນແມ່ນຕົວແທນຂອງໂອກາດທີ່ຍິ່ງໃຫຍ່ ແລະ ພ້ອມກັນນັ້ນກໍ່ເປັນຕົວແທນຄວາມສ່ຽງທີ່ຍິ່ງໃຫຍ່ຕໍ່ສະຖຽນລະພາບຂອງເສດຖະກິດມະຫາພາກຂອງ ສປປ ລາວ ເຊັ່ນກັນ.
- ຈີນນັບມື້ນັບເຂົ້າມາມີອິດທິພົນຕໍ່ຫາຍຂົງເຂດວຽກງານຍຸດທະສາດແຫ່ງຊາດຂອງລາວ, ເຊິ່ງບັນຫາດັ່ງກ່າວນີ້ຕ້ອງໄດ້ພິຈາລະນ ແລະ ຄຸ້ມຄອງຢ່າງຈິງຈັງ ທັງນີ້ກໍ່ເພື່ອປົກປ້ອງຜົນປະໂຫຍດຂອງຊາດລາວ ແລະ ປະຊາຊົນລາວ.
- ປະເທດລາວຄວນສ້າງຄວາມເຂັ້ມແຂງໃນການສ້າງສາຍພົວພັນກັບປະເທດອື່ນໆນອກຈາກຈີນ, ນັ້ນກໍ່ເພື່ອກະຈາຍຄວາມສ່ຽງຈາກຜົນທີ່ຈະເກີດຂຶ້ນຖ້າຫາກໃນອະນາຄົດມີເຫດການບໍ່ຄາດຝັນເກີດຂຶ້ນ.

→ ການຄ້າ: **ອິນເດຍ**, **ຍີ່ປຸ່ນ** ແລະ **ອົດສະຕາລີ**.
→ ການລົງທຶນໂດຍກົງຈາກຕ່າງປະເທດ: **ສະຫະພາບເອີຣົບ** ແລະ **ຍີ່ປຸ່ນ**

# ການເຕີບໂຕ

## ໂອກາດທາງການຄ້າ ແລະ ການລົງທຶນ – ນອກຈາກການເຊື່ອມຕໍ່ສອງຝ່າຍ



**Covid-19**

- ✓ ສະມາຊິກປະເທດ ASEAN ໄດ້ທົບທວນການໃຫ້ຄຳໝັ້ນສັນຍາວ່າບັນດາປະເທດສະມາຊິກຈະສ້າງຄວາມສາມັກຄີ ແລະ ການຮ່ວມມືຮອບດ້ານໃຫ້ເຂັ້ມແຂງກວ່າເດີມ:
  - ○ ການເດີນທາງຫວ່າງປະເທດສະມາຊິກ
  - ○ ການຄ້າເສລີ
- ✓ ໃນໄລຍະສັ້ນ, ລາວສາມາດໝູນໃຊ້ສິ່ງທີ່ກ່າວມາຂ້າງເທິງເພື່ອເລັ່ງໃນການຫຼຸດຜ່ອນຜົນກະທົບ ແລະ ຟື້ນຟູເສດຖະກິດ

→ ເຖິງຈະມີການລະບາດຂອງ Covid-19, ອັດຕາການຈະເລີນເຕີບໂຕທາງເສດຖະກິດຄາດວ່າຈະກັບມາຄືນສູ່ສະພາບປົກກະຕິ ແລະ ມີອັດຕາການຂະຫຍາຍຕົວຫຼາຍກວ່າ 6% ໃນປີ 2021.

ປະຈຸບັນພວມຜັກດັນໃຫ້ມີການເຊັນສັນຍາການຮ່ວມມືດ້ານເສດຖະກິດແບບຮອບດ້ານໃນພາກພື້ນ **(RCEP)**




**ຄວາມຄາດຫວັງທີ່ຍິ່ງໃຫຍ່**

- ✓ ການເຊື່ອມໂຍງລະຫວ່າງປະເທດສະມາຊິກອາຊຽນທີ່ຂະຫຍາຍຕົວຢ່າງວ່ອງໄວ
- ✓ ການເຊື່ອມໂຍງລະຫວ່າປະທດອາຊຽນ ແລະ ພະເທດອາຊຽນບອກ
- ✓ ການປະຕິບັດແບບພິເສດ ແລະ ແຕກຕ່າງຄວນຈະໝົດໄປ
- ✓ ການຈັດສັນໃນພາກພື້ນຈະເປັນຊ່ອງທາງການຊອກຄູ່ຄ້າ ເຊິ່ງເຮັດໃຫ້ເສດຖະກິດມີຄວາມຫຼາກຫຼາຍ, ແລະ ຫຼຸດຜ່ອນຄວາມບໍ່ເຂັ້ມແຂງທາງເສດຖະກິດ

ການຈັບຄູ່ປະເທດສະມາຊິກອາຊຽນດ້ວຍກັນ ຫຼື ຈັບຄູ່ກັບປະເທດອາຊຽນບອກໃນການປະຕິບັດສັນຍາວ່າດ້ວຍການຄ້າ ແລະ ການລົງທຶນຈະເຮັດໃຫ້ເກີດ **ຜົນດີ ແລະ ສ້າງຄວາມເຂັ້ມແຂງໃຫ້ອາຊຽນ ເຊິ່ງຈະເປັນການດຶງດູດຍນັກລົງທຶນໃກ້ກັບ ສປປ ລາວ**

ASEAN-US TIFA

Asian Trade in Goods Agreement

ASEAN-Japan CEPA

ASEAN-Korea Investment Agreement

ASEAN-ANZ FTA

AEC

ASEAN FTA

ASEAN-China Investment Agreement

ASEAN-India Investment Agreement

**ສັນຍາການລົງທຶນຮອບດ້ານອາຊຽນ**

- ປັບປຸງຄວາມໂປ່ງໃສ ແລະ ຄວາມຄາດເດົາໄດ້
- ໃຫ້ການປົກປ້ອງນັກລົງທຶນຂອງບັນດາປະເທດສະມາຊິກຫຼາຍກວ່າເດີມ
- ຮ່ວມໂຄສະນາຂົງເຂດອາຊຽນໃຫ້ເປັນເຂດການລົງທຶນທີ່ມີການເຊື່ອມໂຍງກັນ; ພ້ອມກັບສ້າງເງື່ອນໄຂສະດວກສະບາຍທີ່ອຳນວຍແກ່ການດຳເນີນທຸລະກິດ
- ມີການຫັນເປັນເສລີທາງການຄ້າຢ່າງຈິງຈັງ

ແຜນວຽກທີ່ກ່າວມານັ້ນຄວນຖືກຊີ້ນຳໂດຍ:

1. ກຳນົດຂັ້ນຕອນທີ່ມີປະສິ**ຮ່າງນະໂຍບາຍຫຼັງການຄ້າສະບັບປັບປຸງ ແລະ ແຜນງານ ປີ 2020, ເຊິ່ງລັດຖະບານລາວມີຈຸດປະສົງເພື່ອ:**
2. ດພາບແລະ ຊັດເຈນ ໃນການຈັດຕັ້ງປະຕິບັດວຽກງານການປັບປຸງນະໂຍບາຍທາງດ້ານການຄ້າ
3. ຂະຫຍາຍການສ້າງສາຍພົວພັນທາງການຄ້າກັບຄູ່ຄ້າທີ່ມີທ່າແຮງ
4. ຍົກລະດັບຄວາມອາດສາມາດໃນການເຈລະຈາໃຫ້ກັບພະນັກງານລັດຖະກອນ

# ການເຕີບໂຕ

## ການພັນຂະຫຍາຍວຽກງານທີ່ໄດ້ດຳເນີນຜ່ານມາ

- ກະຊວງ ອຄ
- ກະຊວງ ຜທ
- ອົງການອື່ນໆ

**ການລົງທະບຽນ 3 ຂັ້ນຕອນ.**
ຂັ້ນຕອນການຂໍອະນຸຍາດດຳເນີນທຸລະກິດແບບດັ່ງກ່າວໄດ້ເລີ່ມປະຕິບັດໃນເດືອນ 01/2020 ເປັນຕົ້ນມາ. ແຕ່ເຖິງຢ່າງໃດກໍ່ຕາມ ຂັ້ນຕອນດັ່ງກ່າວຍັງເປັນພຽງໜຶ່ງຂັ້ນຕອນ.

### ປັບປຸງຄວາມງ່າຍດາຍໃນການດຳເນີນທຸລະກິດ

- ກະຊວງ ອຄ
- ກະຊວງ ຜທ
- ອົງການອື່ນໆ

| ຕົວຊີ້ວັດ ຄວາມງ່າຍໃນການດຳເນີນທຸລະກິດ | ຍ້ອນຫຍັງລາວຈຶ່ງເຮັດບໍ່ທັນໄດ້ດີ | ຂັ້ນຕອນດ່ວນທີ່ຕ້ອງດຳເນີນການ |
|---|---|---|
| **ການເລີ່ມຕົ້ນທຸລະກິດ** | ມີຂະບວນການລິເລີ່ມທຸລະກິດມີຄວາມສັບສົນທີ່ສຸດ ແລະ ນະໂຍບາຍ-ລະບຽບກ່ຽວຂ້ອງກໍ່ບໍ່ຈະແຈ້ງເທົ່າທີ່ຄວນ. | ສືບຕໍ່ປະຕິບັດຕາມແຈ້ງການກ່ຽວກັບການອຳນວຍຄວາມສະດວກໃຫ້ພາກທຸລະກິດຂອງ ຂອງກະຊວງອຸດສາຫະກຳ ແລະ ການຄ້າ, ພ້ອມກັບສືບຕໍ່ປັບປຸງດ້ານຕ່າງໆຕາມການຕຳໜິສິ່ງຂ່າວຈາກພາກເອກະຊົນ. |
| **ການຊຳລະອາກອນ** | ທຸລະກິດທີ່ບໍ່ໄດ້ຂຶ້ນທະບຽນມີຫຼາຍ ແລະ ນັບມືນັບເພີ່ມຂຶ້ນ, ການເກັບພັນທະອາກອນກໍ່ມີຊ່ອງຫວ່າງ, ການເກັບພັນທະອາກອນສຳລັບທຸລະກິດຂອງຄົນຕ່າງປະເທດແມ່ນບໍ່ສະເໝີພາບ. | ສ້າງບ່ອນລວມສູນປະຫວັດການຊຳລະອາກອນຂອງພາກທຸລະກິດ ແລະ ບັນທຶກການຊຳລະອາກອນຂອງທຸກຫົວໜ່ວຍ.<br><br>ນຳໃຊ້ລະບົບການຊຳລະອາກອນແບບອີເລັກໂທຣນິກ ແລະ ນຳໃຊ້ລະບົບການເກັບກຳຂໍ້ມູນການຊຳລະອາກອນ. |
| **ການຄ້າຂ້າມແດນ** | ມີຂອດເອກະສານຫຼາຍຂອດ ແລະ ແຕ່ລະຂອດຕ້ອງປະຕິບັດຕາມລະບຽບ-ຕາມຂັ້ນຕອນຫຼາຍເກີນໄປ, ເຊິ່ງເຮັດໃຫ້ພາກທຸລະກິດຕ້ອງໄດ້ລໍຖ້າເຊິ່ງເສຍທັງເວລາ ແລະ ທັງມີຄ່າໃຊ້ຈ່າຍ. | ເຮັດໃຫ້ຂອດເອກະສານ,ຄວາມຕ້ອງການດ້ານເອກະສານ ແລະ ການປະຕິບັດລະບຽບງ່າຍດາຍຂຶ້ນ. |

- ການປັບປຸງຄວາມງ່າຍດາຍໃນການດຳເນີນທຸລະກິດແມ່ນຈະຕ້ອງໄດ້ໃຊ້ຊັບພະຍາກອນຢ່າງຫຼວງຫຼາຍ ແລະ ທັງຕ້ອງອາໄສເວລາໃນການປ່ຽນແປງ. ເຖິງຢ່າງໃດກໍ່ຕາມ, ລາວກໍ່ສາມາດແກ້ໄຂບັນຫາດັ່ງກ່າວໄດ້ສ່ວນໃດໜຶ່ງ ທີ່ຢ່າງໜ້ອຍກໍ່ຈະເຮັດໃຫ້ການປະກອບທຸລະກິດຢູ່ລາວໃນປະຈຸບັນນີ້ງ່າຍຂຶ້ນ ແລະ ກໍ່ບໍ່ໄດ້ຊັບພະຍາກອນ ຫຼື ຂັ້ນຕອນທີ່ຊັບຊ້ອນຫຼາຍ.

### ຈັດຕັ້ງປະຕິບັດ ແລະ ສ້າງຄວາມເຂັ້ມແຂງໃນການປະກອບຄຳເຫັນຂອງທຸກພາກສ່ວນ

ໄປເບິ່ງເອກະສານຊ້ອນທ້າຍ 3




- ການສື່ສານ ແລະ ປະສານງານທີ່ຕັ້ງໜ້າ ກັບສະພາແຫ່ງຊາດ-ສະແດງໃຫ້ເຫັນວ່າພາກລັດໄດ້ເປີດກວ້າງ ແລະ ເອົາໃຈໃສ່ໃນການແກ້ໄຂວຽກງານສົ່ງເສີມການຄ້າ ແລະ ການລົງທຶນໃນ ສປປ ລາວ.
- ຄວາມສອດຄ່ອງກັນໃນດ້ານຄວາມເຂົ້າໃຈ ແລະ ແນວທາງການປະຕິບັດວຽກງານ ຕໍ່ກັບບັນດານະໂຍບາຍ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງຂອງບັນດາກະຊວງ-ຄວາມສັບສົນຕໍ່ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງແຕ່ລະພາກສ່ວນຕໍ່ວຽກງານການຄ້າ ແລະ ການລົງທຶນ ໄດ້ສົ່ງຜົນກະທົບຕໍ່ຄວາມມີປະສິດພາຍໃນການປັບປຸງດ້ານການຄ້າ ແລະ ການລົງທຶນ.
- ການສັງລວມທິດທາງ, ນະໂຍບາຍ ແລະ ລາຍງານ – ຈະເຮັດໃຫ້ການຈັດຕັ້ງປະຕິບັດເປັນໄປຢ່າງມີປະສິດທິພາບ ແລະ ປະສິດທິຜົນ.
- ການສື່ສານກັບພາກເອກະຊົນ – ການຕຳສິ່ງຂ່າວ ຫຼື ການປະກອບຄຳເຫັນໃນດ້ານຕ່າງໆຄວນຈະສະທ້ອນໃຫ້ເຫັນຄວາມຈິງຈາກແຕ່ລະພາກສ່ວນ. ໜຶ່ງໃນຫຼາຍໆວິທີການເຊັ່ນ: ການປຶກສາຫາລືລະຫວ່າງພາກລັດ ແລະ ເອກະຊົນ ເຊິ່ງມີຕົວແທນຈາກປະຊາຊົນ ແລະ ຈາກພາກທຸລະກິດຂະແໜງການກ່ຽວຂ້ອງເຂົ້າຮ່ວມນັ້ນ ຄວນຖືກພິຈາລະນາເຊັ່ນກັນ.

# ການເຕີບໂຕ

## *ການສົ່ງເສີມການຮ່ວມມືດ້ານນະໂຍບາຍ*

- ກະຊວງ ອຄ
- ກະຊວງ ຜທ
- ອົງການອື່ນໆ

ໄປເບິ່ງເອກະສານຊ້ອນທ້າຍ 3



ການຝຶກອົບຮົມເພື່ອສ້າງຄວາມອາດສາມາດ ທີ່ຈັດໂດຍທະນາຄານພັດທະນາອາຊີ (27-30 ສິງຫາ 2019)

**ນະໂຍບາຍທີ່ເຂັ້ມແຂງ**

ແຜນສຳຮອງແມ່ນຖືກລະບຸໄວ້ຢ່າງຈັດເຈນ

ມອບໝາຍວຽກ ແລະ ຄວາມຮັບຜິດຊອບຢ່າງຈັດເຈນ

**ຄຳແນະນຳໃນການຈັດຕັ້ງປະຕິບັດ**

ຊະແໜງການ, ແຮງຈູງໃຈ, ເງື່ອນໄຂ, ກຳນົດໄລຍະເວລາ

ຄວາມພ້ອມໃນການອອກຄຳແນະນຳ

**ແຜນປະຕິບັດງານ**

ປະຕິບັດການດ້ານການປະສານງານໂດຍບັນດາກະຊວງຜ່ານຊ່ອງທາງລະດັບຊາດທີ່ກ່ຽວຂ້ອງ

ເປົ້າໝາຍ ແລະ ສິ່ງສຳຄັນໃນແຕ່ລະໄລຍະ

ນຳສະເໜີກ່ຽວກັບອົງປະກອບຂອງການແຂ່ງຂັນໃຫ້ຜູ້ປະກອບການພາຍໃນຊາບ: ຕົວຊີ້ວັດທາງການແຂ່ງຂັນ ຫຼື ການນຳໃຊ້ລະບົບການໃຫ້ຄະແນນແຕ່ລະອົງປະກອບ, ວິທີການຮັບມື ແລະ ອື່ນໆ.

**ການສ້າງຄວາມອາດສາມາດແກ່ຊັບພະຍາກອນມະນຸດ**

- ຈັດຝຶກອົບຮົມ ເພື່ອພັດທະນາທັກສະ ແລະ ຄວາມສາມາດ
- ນຳໃຊ້ວິທີການແບບຮອບດ້ານເພື່ອໃຫ່ສາມາດຊ່ວຍຍວຽກໃຫ້ຄອບຄຸມທຸກການເຂົ້າມາຊີກິດຈະການຂອງນັກລົງທຶນ.
- ສ້າງໜ່ວຍງານຂ່າວກອງດ້ານເສດຖະກິດ ແລະ ຍຸດທະສາດ

ທັງໝົດຂ້າງເທິງ ແມ່ນເພື່ອສ້າງຜູ້ຊ່ຽວຊານ ແລະ ມີເຂົ້າໃຈເລິກເຊິ່ງຕໍ່ບົດສຶກສາກ່ຽວກັບຜົນການດຳເນີນງານຂອງບັນດາຂະແໜງການຫຼັກ. (1) ທັງນີ້ກໍ່ເພື່ອໃຫ້ລາວສາມາດກ້າວໄປທັນກັບປະເທດຄູ່ແຂ່ງ. (2) ຄາດການກ່ຽວກັບອຸປະສັກ ແລະ ກາລະໂອກາດໄປຄຽງຄູ່ກັນ.

**ຂໍ້ມູນຂ່າວສານກ່ຽວກັບບັນດານະໂຍບາຍ**

- ເພື່ອໃຫ້ມີຄວາມສອດຄ່ອງ ແລະ ຕໍ່ເນື່ອງກັນຂອງກົດໝາຍ - ລະບຽບ ແລະ ການຈັດຕັ້ງປະຕິບັດ
- ປັບປຸງລະບົບເພື່ອໃຫ້ສາມາດເຂົ້າເຖິງຂໍ້ມູນ ແລະ ຫຼຸດຜ່ອນຕົ້ນທຶນທາງການຄ້າ
- ສ້າງຄວາມຈັດເຈນໃຫ້ແກ່ນັກລົງທຶນ, ສ້າງຄວາມໝັ້ນໃຈໃນດ້ານການຄ້າ ແລະ ການລົງທຶນໃຫ້ແກ່ນັກລົງທຶນ

- ການປະຕິບັດຕາມຂັ້ນຕອນການຮ່ວມມືກັນດ້ານນະໂຍບາຍແມ່ນມີຄວາມຈຳເປັນໃນການສ້າງໜ່ວຍງານຂ່າວກອງດ້ານເສດຖະກິດ ແລະ ຍຸດທະສາດ ທີ່ຈະເປັນໜ່ວຍງານຕິດຕາມລົງເລິກກ່ຽວກັບບັນດາຂະແໜງການຫຼັກຂອງລາວ ແລະ ບັນດາປະເທດຄູ່ແຂ່ງ
- ການປະຕິບັດວຽກງານດັ່ງກ່າວຈະຊ່ວຍໃຫ້ລາວສາມາດກ້າວທັນປະເທດຄູ່ແຂ່ງ, ຄາດເດົາອຸປະສັກ-ສະ◌່ງທ້າທາຍ ແລະ ໂອກາດຂອງລາວທຽບກັບປະເທດຄູ່ແຂ່ງ.

**ໜ່ວຍງານປະສານງານ**

- ຕິດຕາມການບັງຄັບໃຊ້ ຫຼື ຈັດຕັ້ງປະຕິບັດແຜນວຽກທີ່ໄດ້ວາງອອກຢ່າງຈັດເຈນ (ສິ່ງທີ່ຈະໄດ້ ແລະ ໂທດ)
- ຕິດຕາມ ແລະ ປະເມີນຜົນ ຕາມ KPIs
- ຫຼຸດຜ່ອນຂັ້ນຕອນ ແລະ ອຳນວຍຄວາມສະດວກຂັ້ນຕອນການອະນຸມັດໃນແຕ່ລະກະຊວງທີ່ກ່ຽວຂ້ອງ

**ວິສາຫະກິດສິງກະໂປ (ESG)**

ຢູ່ພາຍໃຕ້ການຊີ້ນຳຂອງກະຊວງການຄ້າ ແລະ ອຸດສາຫະກຳຂອງປະເທດສິງກະໂປ. ESG ຊ່ວຍໃນການອຳນວຍຄວາມສະດວກ ແລະ ຄຸ້ມຄອງບໍລິສັດຕ່າງຊາດທີ່ມີບໍລິສັດຕັ້ງຢູ່ສິງກະໂປ ແລະ ສົ່ງເສີມການຄ້າສາກົນ. ESG ຍັງມີສ່ວນຮ່ວມໃນການອຳນວຍຄວາມສະດວກດ້ານການຄ້າ, ທົບທວນນະໂຍບາຍທາງດ້ານຕະຫຼາດ, ຍຸດທະສາດ ແລະ ເທກນິກຕ່າງໆທີ່ກ່ຽວຂ້ອງ.

# ສິ່ງທີ່ຕ້ອງປະຕິບັດ ເພື່ອການເຕີບໂຕ

| | ການຂະຫຍາຍຕົວຂອງເສດຖະກິດ | |
|---|---|---|
| ປັດໃຈດ້ານຄົນ | 1. ການຂະຫຍາຍໂຕຂອງ ບັນດາຂະແໜງການທີ່ມີທ່າແຮງ<br>2. ລົງທຶນໃນການສ້າງຄວາມ ອາດສາມາດໃຫ້ແກ່ ຊັບພະຍາກອນມະນຸດ | 1.1 ກະກຽມແຮງງານເພື່ອໃຫ້ປັບໂຕໄດ້<br>2.1 ລົງທຶນໃສ່ການຝຶກອົບຮົມສ້າງຄວາມອາດສາມາດ (ສ້າງທັກສະສະເພາະ, ໃຊ້ KPI ມາຊ່ວຍ, ປັບປຸງຄູ່ມືໃຫ້ເໝາະສົມກັບຕົວຈິງ) |
| ຂະບວນການ | 1. ການຂະຫຍາຍໂຕຂອງ ບັນດາຂະແໜງການທີ່ມີທ່າແຮງ<br>2. ການນຳໃຊ້ການຫັນເປັນ ເສລີດ້ານການຄ້າ<br>3. ສ້າງຄວາມສະດວກໃນ ການດຳເນີນທຸລະກິດ<br>4. ຍົກສູງ ແລະ ປະຕິບັດ ຕາມການປະກອບຄຳເຫັນ ຂອງພາກສ່ວນກ່ຽວຂ້ອງ<br>5. ສົ່ງເສີມການຮ່ວມມືກັນ ດ້ານນະໂຍບາຍ | 1.1 ລະບຸຂັ້ນຕອນການປະຕິຮູບດ້ານການຜະລິດ ຂອງ ສປປ ລາວ<br>2.1 ໝູນໃຊ້ພັນທະສັນຍາຈາກ ASEAN/ACIA/FTs ໃຫ້ເປັນປະໂຫຍດ<br>2.2 ຮັກສາສາຍສຳພັນກັບປະເທດຄູ່ຄ້າທີ່ດີ ແລະ ສ້າງຄວາມເຂັ້ມແຂງດ້ານການຮ່ວມມືໃນ ອົງການລຸ່ມແມ່ນ້ຳຂອງ<br>3.1 ເຮັດໃຫ້ການຄ້າຂາຍຂ້າມແດນງ່າຍຂຶ້ນ<br>4.1 ລາຍງານຫາສະພາແຫ່ງຊາດປະຈຳ<br>4.2 ສ້າງຄວາມສອດຄ່ອງແລະເຂົ້າໃຈກ່ຽວກັບ ນະໂຍບາຍໃຫ້ແກ່ກະຊວງສຳຄັນທີ່ກ່ຽວຂ້ອງ<br>4.3 ລາຍງານການປະຕິບັດງານ<br>4.4 ປະສານງານກັບພາກເອກະຊົນ<br>4.5 ທົບທວນຄຳຄິດເຫັນ, ການຈັດຕັ້ງປະຕິບັດ ນະໂຍບາຍ, ຍຸດທະສາດ ແລະ ວິໄສທັດຂອງລັດ<br>5.1 ທົບທວນຄຳຄິດເຫັນ, ການຈັດຕັ້ງປະຕິບັດ ນະໂຍບາຍ, ຍຸດທະສາດ ແລະ ວິໄສທັດຂອງລັດ |
| ໂຄງລ່າງພື້ນຖານ | 1. ການຂະຫຍາຍໂຕຂອງ ບັນດາຂະແໜງການທີ່ມີທ່າແຮງ<br>2. ສ້າງຄວາມສະດວກໃນ ການດຳເນີນທຸລະກິດ<br>3. ເພີ່ມການຮ່ວມມືດ້ານ ນະໂຍບາຍ | 1.1 ສືບຕໍ່ສ້າງຄວາມເຂັ້ມແຂງໃນການພັດທະນາ ດ້ານໂຄງລ່າງພື້ນຖານ ແລະ ສົ່ງເສີມ ການທ່ອງທ່ຽວ<br>2.1 ລວມສູນຂໍ້ມູນຜູ້ຊຳລະອາກອນ<br>2.2 ນຳໃຊ້ການເກັບກຳຂໍ້ມູນແບບອີເລັກໂທຣນິກ ແລະ ລະບົບການນຳລະອາກອນ<br>3.1 ສ້າງໜ່ວຍງານປະສານງານ<br>3.2 ສ້າງໜ່ວຍງານຂ່າວກອງດ້ານເສດຖະກິດ<br>3.3 ສ້າງ TFIU ແລະ NCTPSD |

# ພາບແຫ່ງຄວາມສຳເລັດ

*ວິທີການຈັດຕັ້ງປະຕິບັດທັງໝົດຂອງລັດ*

ເພື່ອຄວາມສຳເລັດຈະຕ້ອງມີການຮ່ວມມືຈາກບັນດາກະຊວງ

ກະຊວງຄົມມະນາຄົມ

ກະຊວງອຸດສາຫະກຳ ແລະ ການຄ້າ

ກະຊວງແຜນການ ແລະ ການລົງທຶນ




ສະພາແຫ່ງຊາດ

ກະຊວງໄປສະນີ ແລະ ໂທລະຄົມ

ກະຊວງກະສິກຳ ແລະ ປ່າໄມ້

# ການປະເມີນຂະແໜງການ ແລະ ຄຳແນະນຳ



**ແຜນວາດຄຳແນະນຳ**

1.1 ສືບຕໍ່ປັບປຸງແຫຼ່ງຂໍ້ມູນຂ່າວສານເພື່ອໃຫ້ເຂົ້າເຖິງຂໍ້ມູນຂ່າວສານທີ່ເປັນມາດຕະຖານດຽວກັນ
1.3 ໝູນໃຊ້ສື່ສັງຄົມອອນໄລນ໌ ແລະ ເຄື່ອງມືຄົ້ນຫາຂໍ້ມູນໃຫ້ເປັນປະໂຫຍດ
1.2 ກະກຽມຄຳຖາມ-ຄຳຕອບທີ່ຄົນສ່ວນໃຫຍ່ສົນໃຈ

2.1 ສ້າງທັກສະໃຫ້ພະນັກງານ
2.2 ສ້າງລະບົບການພິຈາລະນາອະນຸມັດເອກະສານຕ່າງໆໃນຈຸດດຽວ
2.3 ສ້າງໜ່ວຍງານເບິ່ງແຍງນັກລົງທຶນຕ່າງປະເທດຫຼັງການລົງທຶນ

| | ການແກ້ໄຂເພື່ອຟື້ນຄືນ | ການຟື້ນຟູເສດຖະກິດ | | ການຂະຫຍາຍຕົວຂອງເສດຖະກິດ | |
|---|---|---|---|---|---|
| ປັດໄຈດ້ານຄົນ | <u>ຄົນຄອງການຫວ່າງງານ</u><br>'- ມອບເງິນສົດເພື່ອຊ່ວຍເຫຼືອ<br>'- ຫຼຸດອັດຕາອາກອນ<br>'- ຫາວຽກເຮັດງານທຳໃຫ້<br>'- ລະດົມພາກທຸລະກິດໃຫ້ສືບຕໍ່ຈ້າງພະນັກງານ ແລະ ຊ່ວຍພາກທຸລະກິດໃນສິ່ງທີ່ຈຳເປັນ | 1. ການຂະຫຍາຍໂຕແບບຍືນຍົງຂອງທຸລະກິດ SMEs<br>2. ໝູນໃຊ້ເຂດເສດຖະກິດພິເສດ<br>3. ການກະສິກຳ<br>4. ການສ້າງເສດຖະກິດດີຈີຕອນ<br>5. ຂະແໜງໂລຈິສຕິກ | 1.1 ສ້າງສະມາຄົມທຸລະກິດ<br>2.1 ໂຄສະນາລະດົມໃຫ້ນັກລົງທຶນໃນປະເທດໃຫ້ຄຽງເຂົ້າມາລົງທຶນໃນລາວ<br>3.1 ຝຶກອົບຮົມໃຫ້ຊາວກະສິກອນມີຄວາມສາມາດໃນການຜະລິດ ແລະ ສາມາດສ້າງມາດຕະຖານຄວາມປອດໄພດ້ານອາຫານ<br>4.1 ສົ່ງເສີມໃຫ້ມີການຫັນເປັນເສດຖະກິດດີຈີຕອນ ແລະ ຊຸກຍູ້ນຳໃຊ້ການຄ້າທາງອີເລັກໂທນິກ<br>5.1 ສ້າງຄວາມອາດສາມາດໃຫ້ບໍລິສັດຂົນສົ່ງພາຍໃນໃຫ້ສາມາດແຂ່ງຂັນ | 1. ການຂະຫຍາຍໂຕຂອງບັນດາຂະແໜງການທີ່ມີທ່າແຮງ<br>2. ລົງທຶນໃນການສ້າງຄວາມອາດສາມາດໃຫ້ແກ່ຊັບພະຍາກອນມະນຸດ | 1.1 ກະກຽມແຮງງານເພື່ອໃຫ້ປັບໂຕໄດ້<br>2.1 ລົງທຶນໃສ່ການຝຶກອົບຮົມສ້າງຄວາມອາດສາມາດ (ສ້າງທັກສະສະເພາະ, ໃຊ້ KPI ມາຊ່ວຍ, ປັບປຸງຄູ່ມືໃຫ້ເໝາະສົມກັບຕົວຈິງ) |
| ຂະບວນການ | <u>ສົ່ງເສີມທຸລະກິດ</u><br>'- ລະບຸອຸດສາຫະກຳທີ່ໄດ້ຮັບຜົນກະທົບທາງກົງເພື່ອຊີ້ວ່າຈະຊ່ວຍເຫຼືອໄດ້ດ້ານໃດ<br>'- ສົ່ງເສີມໃຫ້ຫຼຸດອັດຕາອາກອນລາຍໄດ້ທຸລະກິດ ແລະ ອາກອນທີ່ດິນ, ເລື່ອນເວລາການຊຳລະອາກອນຕ່າງໆໃຫ້ພາກທຸລະກິດ | 1. ການຂະຫຍາຍໂຕແບບຍືນຍົງຂອງທຸລະກິດ SMEs<br>2. ໝູນໃຊ້ເຂດເສດຖະກິດພິເສດ<br>3. ເສັ້ນທາງລົດໄຟລາວ-ຈີນ<br>4. ການກະສິກຳ<br>5. ການສ້າງເສດຖະກິດດີຈີຕອນ<br>6. ອຸປະສັກດ້ານການຄ້າທີ່ບໍ່ແມ່ນພາສີ<br>7. ຂະແໜງການໂລຈິສຕິກ | 1.1 ເພີ່ມການອຳນວຍຄວາມສະດວກໃນການເຂົ້າຫາແຫຼ່ງທຶນ<br>1.2 ປັບປຸງການປະສານງານກັບສະມາຄົມການເງິນຈຸລະພາກແຫ່ງຊາດ<br>2. ເພີ່ມການຈ້າງງານໃຫ້ແກ່ແຮງງານພາຍໃນ<br>3.1 ປະເມີນຄືນດ້ານຄວາມຕ້ອງການຕໍ່ສິນຄ້າ<br>3.2 ສ້າງໂມເດວການຄາດການດ້ານເສດຖະກິດ<br>4.1 ເນັ້ນໃສ່ພືດ ແລະ ສະໜຸນໄພທີ່ມີລາຄາສູງ<br>4.2 ຜະລິດໃຫ້ໄດ້ເກີນກຳນົດທີ່ຕ່າງປະເທດຄາດວ່າຈະຊື້<br>5.1 ສ້າງຄະນະສະເພາະກິດດ້ານການຄ້າແບບອີເລັກໂທນິກ<br>6.1 ສືບຕໍ່ຫຼຸດຜ່ອນອຸປະສັກດ້ານການຄ້າທີ່ບໍ່ແມ່ນພາສີ<br>7.1 ປັບປຸງລະບົບການປະສານງານ | 1. ການຂະຫຍາຍໂຕຂອງບັນດາຂະແໜງການທີ່ມີທ່າແຮງ<br>2. ການນຳໃຊ້ການຫັນເປັນເສລີດ້ານການຄ້າ<br>3. ສ້າງຄວາມສະດວກໃນການດຳເນີນທຸລະກິດ<br>4. ຍົກສູງ ແລະ ປະຕິບັດຕາມການປະກອບຄຳເຫັນຂອງພາກສ່ວນກ່ຽວຂ້ອງ<br>5. ສົ່ງເສີມການຮ່ວມມືກັນດ້ານນະໂຍບາຍ | 1.1 ລະບຸຂັ້ນຕອນການປ່ຽນຮູບດ້ານການຜະລິດຂອງ ສປປ ລາວ<br>2.1 ໝູນໃຊ້ພັນທະສັນຍາຈາກ ASEAN/ACIA/FTs ໃຫ້ເປັນປະໂຫຍດ<br>2.2 ຮັກສາສາຍສຳພັນກັບປະເທດຄູ່ຄ້າທີ່ດີ ແລະ ສ້າງຄວາມເຂັ້ມແຂງດ້ານການຮ່ວມມືໃນອົງການລຸ່ມແມ່ນ້ຳຂອງ<br>3.1 ເຮັດໃຫ້ການຄ້າຂາຍຂ້າມແດນງ່າຍຂຶ້ນ<br>4.1 ລາຍງານຫາສະພາແຫ່ງຊາດປະຈຳ<br>4.2 ສ້າງຄວາມສອດຄ່ອງແລະເຂົ້າໃຈກ່ຽວກັບນະໂຍບາຍໃຫ້ແກ່ກະຊວງສຳຄັນທີ່ກ່ຽວຂ້ອງ<br>4.3 ລາຍງານການປະຕິບັດງານ<br>4.4 ປະສານງານກັບພາກເອກະຊົນ<br>4.5 ທົບທວນຄຳຄິດເຫັນ, ການຈັດຕັ້ງປະຕິບັດນະໂຍບາຍ, ຍຸດທະສາດ ແລະ ວິໄສທັດຂອງລັດ<br>5.1 ທົບທວນຄຳຄິດເຫັນ, ການຈັດຕັ້ງປະຕິບັດນະໂຍບາຍ, ຍຸດທະສາດ ແລະ ວິໄສທັດຂອງລັດ |
| ໂຄງລ່າງພື້ນຖານ | <u>ຄວາມສະຖຽນລະພາບຂອງຕ່ອງໂສ້ການຜະລິດ</u><br>'- ເຂົ້າໄປມີສ່ວນຮ່ວມກັບຜູ້ສະໜອງປະຈຸບັນ ແລະ ຜູ້ສະໜອງລາຍໃໝ່<br><u>ການສົ່ງເສີມດ້ານຄົວເຮືອນ</u><br>'- ອຳນວຍຄວາມສະດວກດ້ານຄ່າທຳນຽມຕ່າງໆຂອງພາກລັດ, ອາກອນ ແລະ ສິນເຊື່ອ<br>'- ຫຼຸດລາຄາຄ່າໄຟຟ້າ | 1. ການຂະຫຍາຍໂຕແບບຍືນຍົງຂອງທຸລະກິດ SMEs<br>2. ເສັ້ນທາງລົດໄຟລາວ-ຈີນ<br>3. ການກະສິກຳ<br>4. ການສ້າງເສດຖະກິດດີຈີຕອນ<br>5. ອຸປະສັກດ້ານການຄ້າທີ່ບໍ່ແມ່ນພາສີ<br>6. ຂະແໜງການໂລຈິສຕິກ | 1.1 ສ້າງຄະນະສະເພາະກິດເພື່ອການປັບປຸງຍົກລະດັບ SMEs<br>2.1 ສົ່ງເສີມອຸດສາຫະກຳຜະລິດອຸປະກອນອົງປະກອບ ຫຼື ອາໄຫຼ່ຕ່າງໆ<br>3.1 ນຳໃຊ້ເທັກໂນໂລຢີເພື່ອເຮັດໃຫ້ສິນຄ້າກະສິກຳໄດ້ມາດຕະຖານ ແລະ ປອດໄພ<br>3.2 ສ້າງຊ່ອງທາງໃຫ້ທຸລະກິດແລະຊາວກະສິກອນໄດ້ພົບກັນ<br>4.1 ຈັດຕັ້ງປະຕິບັດຂອບລະບຽບເພື່ອປ້ອງກັນການແຂ່ງຂັນ ແລະ ປົກປ້ອງຜູ້ບໍລິໂພກ<br>5.1 ສ້າງ ແລະ ຮັກສາຖານຂໍ້ມູນກ່ຽວກັບອຸປະສັກການຄ້າທີ່ບໍ່ແມ່ນພາສີ ແລະ ແບ່ງປັນຂໍ້ມູນເພື່ອແກ້ໄຂບັນຫາ<br>6.1 ສ້າງໂຄງລ່າງພື້ນຖານທີ່ສຳຄັນ ແລະ ອຸດສາຫະກຳອາໄຫຼ່ຕາມເສັ້ນທາງລົດໄຟລາວ-ຈີນ | 1. ການຂະຫຍາຍໂຕຂອງບັນດາຂະແໜງການທີ່ມີທ່າແຮງ<br>2. ສ້າງຄວາມສະດວກໃນການດຳເນີນທຸລະກິດ<br>3. ເພີ່ມການຮ່ວມມືດ້ານນະໂຍບາຍ | 1.1 ສືບຕໍ່ສ້າງຄວາມເຂັ້ມແຂງໃນການພັດທະນາດ້ານໂຄງລ່າງພື້ນຖານ ແລະ ສົ່ງເສີມການທ່ອງທ່ຽວ<br>2.1 ລວມສູນຂໍ້ມູນຜູ້ຊຳລະອາກອນ<br>2.2 ນຳໃຊ້ການເກັບກຳຂໍ້ມູນແບບອີເລັກໂທນິກ ແລະ ລະບົບການຊຳລະອາກອນ<br>3.1 ສ້າງໜ່ວຍງານປະສານງານ<br>3.2 ສ້າງໜ່ວຍງານຂ່າວກອງດ້ານເສດຖະກິດ<br>3.3 ສ້າງ TFIU ແລະ NCTPSD |

# ແຜນວຽກ ທີ່ຊີ້ນຳໂດຍກະຊວງ ອຄ: ແຜນພັດທະນາວິສາຫະກິດຂອງ ສປປ ລາວ

## ເອກະສານຊ້ອນທ້າຍ 1

- ວຽກງານເບື້ອງຕົ້ນ
- ການວາງແຜນ ນະໂຍບາຍ
- ເລີ່ມປະຕິບັດ

| | ໄລຍະຟື້ນໂຕ <6 ເດືອນ | ໄລຍະຟື້ນຟູເສດຖະກິດ 6 ເດືອນ - 2 ປີ | ໄລຍະຂະຫຍາຍໂຕ> 2 ປີ | |
|---|---|---|---|---|
| ສະມາຄົມທຸລະກິດ | ປະເມີນຊ່ອງຫວ່າງທີ່ມີຢູ່ປະຈຸບັນ (ບົດປະເມີນ/ປະເມີນແບບສົນທະນາເປັນກຸ່ມສະເພາະ) | ເລີ່ມໂຄງການທົດລອງ | ສົ່ງເສີມໂຄງການທີ່ຖືກເລືອກໃຫ້ປະຕິບັດເພື່ອທີ່ຈະສ້າງຄວາມເຂັ້ມແຂງສະມາຄົມທຸລະກິດ ແລະ ຮັບປະກັນການເຂົ້າເຖິງຕະຫຼາດ | ຮັບປະກັນການເຂົ້າເຖິງຕະຫຼາດຂອງບັນດາວິສາຫະກິດໃນປະເທດ |
| ການຫັນເປັນຍຸກດີຈີຕອນ ແລະ ການຄ້າທາງອີເລັກໂທຣນິກ 1. ພາກ ລັດຖະບານ 2. ພາກທຸລະກິດ | ປະເມີນຊ່ອງຫວ່າງຂອງແຜນງານເສດຖະກິດດີຈີຕອນຂອງລັດຖະບານ; ອອກແບບ ແລະ ພັດທະນາແຜນເສດຖະກິດດີຈີຕອນຂອງພາກລັດ | ສ້າງແຜນງານເສດຖະກິດດີຈີຕອນ ຂອງລັດເປັນລາຍລະອຽດ; **ລັດຖະບານ** ນຳພາໂດຍຕົວຢ່າງ ສ້າງຂະບວນການພາຍໃນໃຫ້ເປັນດີຈະຕອນ; ສຳມະນາ/ຝຶກອົບຮົມ/ສະໜັບສະໜູນ ທຸລະກິດໃນການປັບປຸງ ແລະ ລົງທຶນໃນວຽກງານການສ້າງທັກສະ ແລະ ຄວາມອາດສາມາດໃຫ້ຄົນ | **ລັດຖະບານ** ປັບນະໂຍບາຍ/ລະບຽບເພື່ອຮັບໃຊ້ໃນຍຸກດີຈີຕອນ | |
| ນຳໃຊ້ບັນດາສັນຍາການຄ້າເສລີ | ປະເມີນຊ່ອງຫວ່າງຂອງສັນຍາການຄ້າເສລີພາຍໃນພາກເອກະຊົນ | ນຳໃຊ້ສັນຍາການຄ້າເສລີ ແລະ ສັນຍາການຄ້າພາກພື້ນໃຫ້ເກີດປະໂຫຍດສູງສຸດ | ດຳເນີນການຈັດຝຶກອົບຮົມຍົກລະດັບຄວາມຮູ້ເພື່ອຊ່ວຍປິດຊ່ອງຫວ່າງແລະ ເພື່ອເປັນການອຳນວຍຄວາມສະດວກໃນການເຂົ້າເຖິງຕະຫຼາດ | |
| ສ້າງຍີ່ຫໍ້ສິນຄ້າໃຫ້ເປັນທີ່ຮູ້ຈັກພາຍໃນ | ເຂົ້າເຖິງຂໍ້ມູນໄດ້ໂດຍກົງຜ່ານສື່ສັງຄົມອອນໄລ; ກະກຽມຄວາມພ້ອມພາຍໃນ (ຕາມກະຊວງ ແລະ ອື່ນໆ) | | ສົ່ງເສີມການໂຄສະນາ ເຊັ່ນການຈັດງານວາງສະແດງສິນຄ້າເປັນຕົ້ນ | ການສົ່ງເສີມຍີ່ຫໍ້ການລົງທຶນລາວ |
| ສ້າງຍີ່ຫໍ້ສິນຄ້າໃຫ້ເປັນທີ່ຮູ້ຈັກພາຍນອກ | ອອກແບບ ແລະ ພັດທະນາຍີ່ຫໍ້ການລົງທຶນລາວໂດຍເນັ້ນໃສ່ທຸລະກິດ SMEs | ກະກຽມຄວາມພ້ອມພາຍນອກເພື່ອສົ່ງເສີມການໂຄສະນາ | | |
| ໜ່ວຍງານປະສານງານ | ຈັດຕັ້ງປະຕິບັດຂັ້ນຕອນກ່ອນການປະເມີນຂອງຊ່ອງວ່າງທີ່ມີໃນປະຈຸບັນ | ເລີ່ມປະຕິບັດໜ່ວຍງານປະສານງານ; ສ້າງແຜນງານແບບຫຼາຍຝ່າຍຂອງບັນດາກະຊວງroadmap | ຊ່ວຍເຫຼືອບັນດາໂຄງການທີ່ຖືກເລືອກຈັດຕັ້ງປະຕິບັດ ຕົວຢ່າງ: ການຊ່ວຍເຫຼືອດ້ານທຶນໃຫ້ແກ່ທຸລະກິດ) | ຄວາມຍືນຍົງຂອງລະບົບວິສາຫະກິດແບບອະນຸລັກ |
| ໜ່ວຍງານຂ່າວກອງດ້ານເສດຖະກິດ | ປະເມີນຊ່ອງຫວ່າງທີ່ມີຢູ່ປະຈຸບັນ (ບົດປະເມີນ/ປະເມີນແບບສົນທະນາເປັນກຸ່ມສະເພາະ) | ລະບຸພະນັກງານໃນອົງກອນຜູ້ທີ່ມີພອນສະຫວັນ ແລະ ຄວາມຮູ້ ເພື່ອຈ້າງງານພະນັກງານດັ່ງກ່າວ (ເຊັ່ນ: ໃຫ້ພະນັກງານດັ່ງກ່າວຮັບຜິດຊອບວຽກງານດ້ານເສດຖະກິດທີ່ຕິດພັນກັບພາກສ່ວນອື່ນໆ) | ດຳເນີນໜ່ວຍງານຂ່າວກອງດ້ານເສດຖະກິດ; ສົ່ງເສີມໂຄງການທີ່ໄດ້ຮັບການຄັດເລືອກໃຫ້ປະຕິບັດ | |

ພາບສະແດງຕົວຢ່າງໜ້າວຽກແຜນພັດທະນາວິສາຫະກິດທີ່ຊີ້ນຳໂດຍກະຊວງອຸດສາຫະກຳແລະ ການຄ້າ

**ພັດທະນາຂະແໜງກາເຟ: ກະຊວງ ຜທ ຈະເຮັດຫຍັງແນ່ໃນຂະແໜງນີ້**

- ປັບບໍລິມາດການຜະລິດສິນຄ້າກະສິກຳລະດັບດີ/ພືດທີ່ມີມູນຄ່າສູງ ເພື່ອຍົກລະດັບມູນຄ່າຕ່ອງໂສ້ຂອງປະເທດລາວ
- ເຂົ້າຮ່ວມການຝຶກອົບຮົມໃນກຸ່ມສົ່ງເສີມການລົງທຶນ ເພື່ອຍົກສູງການຮ່ວມມື ແລະ ສ້າງຄວາມເຂັ້ມແຂງວົງຈອນຄຳຄິດເຫັນ ແລະ ຊຸກຍູ້ການປະສານງານລະຫວ່າງ ກະຊວງ ອຄ, ການວຽນະໂຍບາຍການລົງທຶນ ແລະ ພາກເອກະຊົນ (ການຟື້ນຕົວ/ການຟື້ນຟູ)
- ເອົາໃຈໃສ່ສົ່ງເສີມກາເຟຍີ່ຫໍ້ລາວ (ການຟື້ນຟູ/ການເຕີບໂຕ)

# ເອກະສານຊ້ອນທ້າຍ 2

# ແຜນວຽກຊີ້ນຳໂດຍ ກະຊວງ ຜທ: ການເພີ່ມຂະໜາດການລົງທຶນໃນຂະແໜງກາເຟ

- ການວາງແຜນ
- ການຝຶກອົບຮົມ
- ໝາກຜົນ
- ກິດຈະກຳປະສານ
- ການຊ່ວຍເຫລືອ
- ນະໂຍບາຍ

## ໄລຍະຟື້ນຕົວ (6 ເດືອນ)

- ປະເມີນຄວາມແຕກຕ່າງທີ່ມີຢູ່ ລະ ສິ່ງທ້າທາຍ ສຳລັບຂະແໜງກາເຟ (ການປຶກສາຫາລືຫລາຍຂະແໜງການ– ວິສາຫະກິດຂະໜາດນ້ອຍ ແລະ ກາງ, ສະມາຄົມ) ແລະ ຄວາມແຕກຕ່າງໃນຍີ່ຫໍ້ຂອງກາເຟລາວ
- ພັດທະນາແຜນສົ່ງເສີມການລົງທຶນ ສຳລັບຂະແໜງກາເຟ
- ຄັດເລືອກຜູ້ເຂົ້າຮ່ວມການຝຶກອົບຮົມ ຜ່ານສະມາຄົມກາເຟລາວ

## ການຟື້ນຟູ (1 ປີ)

**ຝຶກອົບຮົມ (4-6 ເດືອນ)**

- ການເຂົ້າຮ່ວມຂອງທຸລະກິດໃນການຝຶກອົບຮົມເຜີຍແຜ່ການລົງທຶນ ຊີ້ນຳໂດຍ ກະຊວງ ຜທ
- ເປົ້າໝາຍນັກລົງທຶນທີ່ມີທັກສະ
- ການອຳນວຍຄວາມສະດວກດ້ານການລົງທຶນ ແລະ ການຮ່ວມມື
- ບັນທຶກການປະເມີນ ແລະ ການເຊື້ອເຊີນນັກລົງທຶນ(ພາກລັດ/ເອກະຊົນ)ຂອງກະຊວງ ຜທ ເພື່ອເຂົ້າຮ່ວມງານພົບປະກັບທຸລະກິດ

**ກິດຈະກຳປະສານງານ (ຫລັງຝຶກອົບຮົມ 5 ມື້)**

- ຈັບຄູ່ທຸລະກິດກັບນັກລົງທຶນທີ່ມີທ່າແຮງ ເພື່ອຈັດຕັ້ງປະຕິບັດແຜນສົ່ງເສີມການລົງທຶນ
- ເວທີປຶກສາຫາລືພາກລັດ ແລະ ພາກທຸລະກິດ ເພື່ອພັດທະນາຂະແໜງການເຟ
- ການເຂົ້າເຖິງແຜນຈັດຕັ້ງປະຕິບັດຂອງທຸລະກິດ ເພື່ອສະໜອງການຊ່ວຍເຫລືອ

**ການສະເໜີຂໍການຊ່ວຍເຫລືອດ້ານການເງິນ (6 ເດືອນ)**

- ໃຫ້ການຊ່ວຍເຫລືອທຸລະກິດເປົ້າໝາຍຜ່ານການໃຫ້ທຶນຮອນຂະໜາດນ້ອຍ
- ສະໜອງໃບຢັ້ງຢືນສຳລັບທຸລະກິດທີ່ຖືກຄັດເລືອກ (ຍີ່ຫໍ້ລາວ)
- ສະໜອງການສະໜັບສະໜູນເພີ່ມເຕີມໃຫ້ກັບທຸລະກິດ ຖ້າຕ້ອງການ

## ການເຕີບໂຕ (> 1 ປີ)

- ເຮັດວຽກກັບກະຊວງອື່ນ ເພື່ອກຳນົດການວາງນະໂຍບາຍບົນພື້ນຖານການຈັດຕັ້ງປະຕິບັດທີ່ດີ
- ຊຸກຍູ້ສົ່ງເສີມການເພີ່ມດ້ານການລົງທຶນ
- ສືບຕໍ່ສົ່ງເສີມຂະແໜງກາເຟລາວ ໃຫ້ເໝາະສົມກັບປາຍທາງຂອງການລົງທຶນ

## ເປົ້າໝາຍສຸດທ້າຍ

- ✓ ພັດທະນາຍີ່ຫໍ້ຂອງຂະແໜງກາເຟ
- ✓ ຍົກລະດັບມູນຄ່າຕ່ອງໂສ້ຂອງ ສປປ ລາວ
- ✓ ສົ່ງອອກຫລາຍຂຶ້ນ

**(1) ກໍລະນີສຶກສາ: ເທດສະການກາເຟອິນໂດເນເຊຍ ຈັດໂດຍກະຊວງການຄ້າ ອິນໂດເນເຊຍ**

ງານດັ່ງກ່າວ ໄດ້ມີການລິເລີ່ມເພື່ອສົ່ງເສີມເມັດກາເຟພາຍໃນປະເທດ ແລະ ສົ່ງເສີມການສົ່ງອອກ ໂດຍສະເພາະສົ່ງໄປຍັງສະຫະພາບຢູໂຣບທີ່ມີຄວາມຊັກຊ້າດ້ານການຄ້າໃນລະຫວ່າງການລະບາດ. ໂດຍມີຈຸດປະສົງ ເພື່ອຄວາມຫລາກຫລາຍຕົວບົ່ງຊີ້ດ້ານພູມສັນຖານຂອງຕະຫລາດກາເຟ, ການອອກແບບຜະລິດຕະພັນ ທີ່ມີແຫລ່ງກຳເນີດສະເພາະພາກພື້ນ ແລະ ມີຄຸນະພາບ ຫລື ເອກະລັກທີ່ຕິດພັນກັບພາກພື້ນດັ່ງກ່າວ. ອິນໂດເນເຊຍ ແລະ ສະຫະພາບຢູໂຣບ ໄດ້ມີສັນຍາໃນການສົ່ງເສີມການເຟກາໂຍ ຜ່ານການເຊື່ອມໂຍງກັບພາກພື້ນອາຊຽນທີ່ໄດ້ຮັບການສະໜັບສະໜູນໂດຍ ອີຢູ (ARISE) Plus program. ແຜນງານດັ່ງກ່າວມີມູນຄ່າ 15 ລ້ານເອີໂຣ (17,5 ລ້ານໂດລາສະຫາລັດ) ແລະ ຈະສິ້ນສຸດໃນປີ 2023.

**ສຳລັບປະເທດລາວ: ງານພົບປະ ອາດຈະເປັນການແນະນຳຄືກັບ "ສັບດາກາເຟ" ທີ່ ກະຊວງ ຜທ ຈະຕ້ອງສະໜອງເຄືອຂ່າຍໃຫ້ກັບງານ ແລະ ເຊື້ອເຊີນສະມາຄົມອື່ນທີ່ສຳຄັນເຂົ້າຮ່ວມ ເພື່ອຊຸກຍູ້ການລົງທຶນທີ່ມີທ່າແຮງສຳລັບຂະແໜງການ.**

**(2) ກໍລະນີສຶກສາ: ສະມາຄົມປະມູນກາເຟສິງກະໂປ**

ສະມາຄົມດັ່ງກ່າວ ໄດ້ເລີ່ມຕົ້ນດຳເນີນການປະມູນກາເຟແບບອອນລາຍໃນເດືອນຕຸລາ 2020, ຊຶ່ງເຮັດໃຫ້ກາເຟຈຳນວນ 56 ລັອດ ຖືກຊື້ໄປໂດຍບໍລິສັດຜູ້ຜະລິດກາເຟຊັ້ນນຳ ຈຳນວນ 45 ລາຍທົ່ວໂລກ.

**ສຳລັບ ສປປ ລາວ: ເພື່ອຫຼຸດຜ່ອນສິ່ງທ້າທາຍ ຫຼື ອຸປະສັກທາງການຄ້າ ແລະ ການສະໜອງ, ການປະມຸນຊື້-ຂາຍກາເຟໃນໄລຍະຟື້ນຟູ ຫຼື ໄລຍະການຂະຫຍາຍໂຕຂອງເສດຖະກິດ ຂອງປະເທດລາວນັ້ນ ຄວນຈະອະນຸຍາດໃຫ້ຜູ້ຊື້ສາມາດເຂົ້າເຖິງແຫຼ່ງປູກຝັງ ຫຼື ຜູ້ສະໜອງໄດ້ເລີຍ. ທັງນີ້ກໍ່ເພື່ອໃຫ້ຜູ້ຜະລິດສາມາດເຂົ້າເຖິງຕະຫຼາດ ຫຼື ສ້າງຊ່ອງທາງການຂາຍສິນຄ້າໃນຕະຫຼາດໂລກໄດ້. ຕໍ່ກັບການເຊື່ອມໂຍງລະຫວ່າງຜູ້ຜະລິດ ແລະ ຜູ້ຊື້ ນັ້ນ, ກະຊວງ ຜທ ສາມາດອຳນວຍຄວາມສະດວກ.**

ພາບສະແດງຕົວຢ່າງແຜນຊີ້ນຳຂະແໜງການຜະລິດການເຟທີ່ຊີ້ນຳໂດຍກະຊວງແຜນການ ແລະ ການ

# ການປະສານງານລະຫວ່າງ ກະຊວງ ຜທ ແລະ ກະຊວງ ອຄ: ການວາງນະໂຍບາຍທີ່ມີປະສິດທິຜົນໃນໄລຍະຂອງການເຕີບໂຕ

## ເອກະສານຊ້ອນທ້າຍ 3

ຜທ MPI
ກະຊວງອຸດສາຫະກໍາ ແລະ ການຄ້າ
MOIC
...stry and Commerce

**ການປັບປຸງ-ຜັນຂະຫຍາຍຄໍາຄິດເຫັນຕ່າງໆຮ່ວມກັບພາກເອກະຊົນ, ຜູ້ໃຫ້ການຊ່ວຍເຫລືອດ້ານທຶນຮອນ ແລະ ພາກສ່ວນຜູ້ສ້າງນະໂຍບາຍ**

ການລະບຸຄວາມແຕກຕ່າງທີ່ສໍາຄັນໃນວົດລາຍງານ:

1. ການປະສານງານທີ່ບໍ່ພຽງພໍລະຫວ່າງຜູ້ໃຫ້ທຶນຊ່ວຍເຫລືອດ້ານທຶນຮອນ, ບັນດາກະຊວງ ແລະ ອົງການທີ່ກ່ຽວຂ້ອງ
2. ຂາດການແບ່ງປັນຂໍ້ມູນລະຫວ່າງກະຊວງດ້ວຍກັນ
3. ການເກັບກໍາ ແລະ ເຊື່ອມໂຍງຄໍາຄິດເຫັນທີ່ບໍ່ສອດຄ່ອງກັນຂອງພາກເອກະຊົນ

**ການລະບຸຂໍ້ສະເໜີ ແລະ ຊ່ອງວ່າງລະຫວ່າງຜູ້ໃຫ້ການຊ່ວຍເຫລືອດ້ານທຶນຮອນ, ບັນດາກະຊວງ ແລະ ອົງການທີ່ກ່ຽວຂ້ອງ ເພື່ອຫລຸດຜ່ອນຄວາມສັບສົນກ່ຽວກັບຄວາມຮັບຜິດຊອບ ແລະ ຂອບເຂດສິດໃນລະດັບການສ້າງແຜນ,**

**ຈັດເວທີລວບລວມການຕັດສິນໃຈທີ່ສໍາຄັນ, ການລາຍງານ ແລະ ການນໍາສະເໜີ** ທີ່ໄດ້ກຽມພ້ອມໃຫ້ຜູ້ມີສ່ວນຮ່ວມເພື່ອການປັບປຸງທີ່ຖືກຕ້ອງຢ່າງຕໍ່ເນື່ອງ

**ຈຸດປະສານງານທີ່ສໍາຄັນສໍາລັບການປະສານງານ ລະຫວ່າງກະຊວງ ຜທ ແລະ ກະຊວງ ອຄ ເພື່ອການເຕີບໂຕທີ່ຍືນຍົງ**

**ການທົບທວນຂໍ້ສະເໜີຮ່ວມ** ແລະ ການສ້າງຍຸດທະສາດ, ນະໂຍບາຍ ແລະ ວິໄສທັດແຫ່ງຊາດ ຄືນໃໝ່

ເອົາໃຈໃສ່ປະສານງານໃນວຽກທີ່ປະຕິບັດແລ້ວ ໂດຍການປະສານສົມທົບກັບສະພາແຫ່ງຊາດ

ເກັບກໍາຂໍ້ສະເໜີໂດຍກົງຈາກພາກເອກະຊົນຜ່ານການປຶກສາຫາລືບັນຫາສະເພາະ ແລະ ເປັນປະຈໍາ

**ການຮ່ວມມືດ້ານນະໂຍບາຍ**

ການລະບຸຄວາມແຕກຕ່າງທີ່ສໍາຄັນໃນວົດລາຍງານ:

1. ການຊໍ້າຊ້ອນ ແລະ ຂາດການປະສານງານໃນການຈັດຕັ້ງປະຕິບັດນະໂຍບາຍການຄ້າ ແລະ ການລົງທຶນ
2. ຄວາມຊໍານານງານທີ່ບໍ່ກົງກັນຂອງບຸກຄະລາກອນໃນການຈັດຕັ້ງປະຕິບັດນະໂຍບາຍ
3. ຂາດຄວາມຮູ້ກ່ຽວກັບແຜນພັດທະນາຂອງຄູ່ແຂ່ງຂັນ ແລະ ຄວາມຜິດພາດໃນການຄາດການແຊກແຊງ/ໂອກາດ

ສ້າງຂີດຄວາມສາມາດດ້ານຊັບພະຍາກອນມະນຸດ ຜ່ານຄູ່ມືການບໍລິການລູກຄ້າ/ຈັດຝຶກອົບຮົມການສ້າງບຸກຄະລາກອນ

ສ້າງຕັ້ງອົງກອນປະສານງານ

ສ້າງຕັ້ງໜ່ວຍງານຂ່າວກອງດ້ານເສດຖະກິດ ແລະ ຍຸດທະສາດ (ລົງເລິກສຶກສາສະເພາະປະສິດທິພາບຂອງຂະແໜງການທີ່ສໍາຄັນຂອງ ສປປ ລາວ)

ສ້າງຕັ້ງນະໂຍບາຍປະສານງານ ໂດຍຮັບປະກັນການໄຫລຜ່ານທີ່ຈະແຈ້ງຈາກ (1) ການສ້າງນະໂຍບາຍທີ່ເຂັ້ມແຂງ (2) ຄູ່ມືແນະນໍາໃນການຈັດຕັ້ງປະຕິບັດທີ່ຊັດເຈນ ແລະ (3) ແຜນຈັດຕັ້ງປະຕິບັດເປົ້າໝາຍ

ສ້າງຕັ້ງໜ່ວຍງານຈັດຕັ້ງປະຕິບັດການອໍານວຍຄວາມສະດວກດ້ານການຄ້າໃນທຸກກົມ ພາຍໃຕ້ຄະນະກໍາມະການແຫ່ງຊາດ ເພື່ອການຄ້າ ແລະ ການພັດທະນາພາກເອກະຊົນ (NCTPSD)